# ຈັນຍາບັນນິຄອນ

Revised April 1, 2024

## ຄຳນຳ

ຈັນຍາບັນນິຄອນ (ຫຼື "ຫຼັກຈັນຍາບັນ") ກຳນົດຈຸດຢືນພື້ນຖານຂອງນິຄອນຄຣໍປໍເຣຊັນ ແລະ ບໍລິສັດໃນເຄືອນິຄອນທົ່ວໂລກໃນການບັນລຸຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນ (Corporate Social Responsibilities (CSR)) ແລະ ເປັນມາດຕະຖານຫຼັກໃນການປະພຶດປະຕິບັດຕົນສຳລັບກຳມະການ, ເຈົ້າໜ້າທີ່ບໍລິຫານ ແລະ ພະນັກງານຂອງອົງກອນ(ຫຼືບຸກຄະລາກອນ) ນະໂຍບາຍຄວາມຍືນຍົງຂອງນິຄອນຄຣໍປໍເຣຊັນກຳນົດຄວາມມຸ່ງໝັ້ນຂອງບໍລິສັດໃນການມີສ່ວນຮ່ວມໃນຄວາມຍືນຍົງທາງສັງຄົມ ແລະ ການເຕີບໃຫຍ່ທີ່ຍືນຍົງໂດຍການຫຼອມລວມປັດຊະຍາທຸລະກິດຂອງນິຄອນຄື: "ຄວາມໜ້າເຊື່ອຖື ແລະ ສ້າງສັນ" ເຂົ້າກັບນະໂຍບາຍນີ້ ການນຳນະໂຍບາຍນີ້ໄປໃຊ້ກັບທຸກຄົນເພື່ອຊ່ວຍສົ່ງເສີມຄວາມຮັບຜິດຊອບຕໍ່ສັງຄົມ ແລະ ອຸດທິດຕົນໃຫ້ກັບການພັດທະນາສັງຄົມຢ່າງຍືນຍົງ ບຸກຄະລາກອນທຸກຄົນຕ້ອງມຸ່ງໝັ້ນທີ່ຈະປະຕິບັດຕາມດ້ວຍຄວາມສຸຈະລິດ, ຈິງໃຈ ແລະ ຄວາມເປັນມືອາຊີບ ຫຼັກຈັນຍາບັນເປັນແນວປະຕິບັດທີ່ອາດບໍ່ໄດ້ບົ່ງບອກເຖິງວິທີການຮັບມືກັບທຸກສະຖານະການ ແລະ ມີໄວ້ເພື່ອຊ່ວຍໃຫ້ບຸກຄະລາກອນສາມາດຕັດສິນໃຈໃນເລື່ອງທີ່ກ່ຽວຂ້ອງກັບການປະຕິບັດງານຂອງຕົນໄດ້ຢ່າງຖືກຕ້ອງຊອບທຳ

## ຂອບເຂດ

ຫຼັກຈັນຍາບັນນີ້ໃຊ້ບັງຄັບກັບກຳມະການ, ເຈົ້າໜ້າທີ່ບໍລິຫານ, ພະນັກງານ(ທຸກຄົນ) ແລະ ພະນັກງານສັນຍາຈ້າງ "ນິຄອນ" ໃນທີ່ນີ້ໝາຍເຖິງຫຼັກຈັນຍາບັນທີ່ອ້າງອີງເຖິງນິຄອນຄຣໍປໍເຣຊັນ ແລະ ບໍລິສັດໃນເຄືອນິຄອນທົ່ວໂລກ ແລະ "ພວກເຮົາ" ໝາຍເຖິງບຸກຄະລາກອນທັງໝົດຂອງນິຄອນ

## 1. ໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ຈັນຍາບັນນິຄອນ

- ພວກເຮົາມີໜ້າທີ່ປະຕິບັດຕາມຫຼັກຈັນຍາບັນ ແລະ ນະໂຍບາຍກ່ຽວກັບການປະພຶດປະຕິບັດຕົນໃນການເຮັດວຽກ ແລະ ການດຳເນີນທຸລະກິດເຊິ່ງກຳນົດຂຶ້ນໂດຍບໍລິສັດລວມເຖິງກົດໝາຍທີ່ກ່ຽວຂ້ອງ ພວກເຮົາຕ້ອງດຳເນີນທຸລະກິດຂອງນິຄອນຢ່າງມີຈະລິຍະທຳ ແລະ ເພື່ອປະໂຫຍດສູງສຸດຂອງນິຄອນຕະຫຼອດເວລາທີ່ເປັນພະນັກງານ ຫຼື ເຮັດວຽກໃຫ້ນິຄອນ

- ກຳມະການ, ເຈົ້າໜ້າທີ່ບໍລິຫານ, ຜູ້ຈັດການ ແລະ ຫົວໜ້າຄຸມງານຂອງນິຄອນ ທຸກຄົນຕ້ອງມີຄວາມຮັບຜິດຊອບໃຫ້ການເຮັດວຽກເປັນໄປຢ່າງຖືກຕ້ອງ ແລະ ຊອບທຳ, ກະຕືລືລົ້ນໃນການສົ່ງເສີມການສື່ສານໃນທຸກລະດັບພາຍໃນອົງກອນ ແລະ ປະຕິບັດຕົນເປັນຕົວຢ່າງທີ່ດີ, ຊີ້ນຳ ແລະ ສົ່ງເສີມໃຫ້ຜູ້ອື່ນຍອມຮັບ ແລະ ປະຕິບັດຕາມຫຼັກຈັນຍາບັນ ນອກຈາກນີ້, ກຳມະການເຈົ້າໜ້າທີ່ບໍລິຫານ, ຜູ້ຈັດການ ແລະ ຫົວໜ້າຄຸມງານຂອງນິຄອນທຸກຄົນຍັງມີໜ້າທີ່ໃນການສະໜັບສະໜູນໃຫ້ພະນັກງານເຂົ້າໃຈຫຼັກຈັນຍາບັນອີກດ້ວຍ

### ຫຼັກຄິດຂອງນິຄອນ

ພະນັກງານທຸກຄົນມີບົດບາດສຳຄັນໃນການສະໜັບສະໜູນໜ້າຕາຂອງນິຄອນເພື່ອໃຫ້ນິຄອນເຕີບໃຫຍ່ຢ່າງຕໍ່ເນື່ອງໂດຍການສ້າງຄວາມໄວ້ວາງໃຈ ແລະ ຄວາມໜ້າເຊື່ອຖືລວມເຖິງການໃຫ້ຄຸນຄ່າໃໝ່ໆໃນຖານະທີ່ເປັນບໍລິສັດລະດັບໂລກ ພວກເຮົາບໍ່ພຽງແຕ່ຕ້ອງເຮັດຕາມກົດໝາຍ, ຂໍ້ບັງຄັບ ແລະ ກົດລະບຽບຂອງບໍລິສັດເທົ່ານັ້ນ ແຕ່ຍັງຕ້ອງໝັ້ນໃຈວ່າການດຳເນີນການຂອງພວກເຮົາສອດຄ່ອງກັບຫຼັກຈັນຍາບັນ ບຸກຄະລາກອນຈະປະຕິບັດໜ້າທີ່ຂອງຕົນຢ່າງເປັນລະບົບ ແລະ ມີປະສິດທິພາບຕາມມາດຕະຖານການຕັດສິນໃຈທີ່ກ່ຽວຂ້ອງເຊິ່ງກຳນົດຄວາມຮັບຜິດຊອບ ແລະ ອຳນາດຕາມຜັງອົງກອນຂອງນິຄອນ ແລະ ຕຳແໜ່ງບຸກຄະລາກອນ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ອ່ານ ແລະ ທຳຄວາມເຂົ້າໃຈຫຼັກຈັນຍາບັນຢ່າງລະອຽດ
- ມີສ່ວນຮ່ວມໃນການຝຶກອົບຮົມກ່ຽວກັບຫຼັກຈັນຍາບັນທີ່ຈັດໂດຍນິຄອນ
- ປະຕິບັດຕາມຫຼັກຈັນຍາບັນໃນການດຳເນີນທຸລະກິດປະຈຳວັນ
- ປະຕິບັດຕາມກົດອຳນາດການຕັດສິນໃຈຂອງບໍລິສັດ ແລະ ອີງກອນທີ່ກ່ຽວຂ້ອງກັບຂະບວນການຂັ້ນຕອນການອະນຸມັດ ແລະ ການລາຍງານໃນຂະນະທີ່ປະຕິບັດໜ້າທີ່ໃນຕຳແໜ່ງຂອງຕົນເອງ
- ສອບຖາມຫົວໜ້າງານເມື່ອມີຂໍ້ສົງໃສ
- ຕ້ອງລາຍງານທັນທີເມື່ອເກີດການຝ່າຝືນ ຫຼື ເມື່ອສົງໃສວ່າມີການຝ່າຝືນ

ຫົວໜ້າອົງກອນທຸກຄົນຈະ:

- ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງຕົນໃນການບັນລຸຜົນຢ່າງສະໝ່ຳສະເໝີດ້ວຍວິທີການທີ່ຖືກຕ້ອງເໝາະສົມມີຈະລິຍະທຳ ແລະ ຖືກຕ້ອງຕາມກົດໝາຍ
- ຕອບສະໜອງຕໍ່ການຂໍຄຳປຶກສາ, ລາຍງານ, ສອບຖາມ, ຂໍການອະນຸມັດ ແລະ ຄຳຂໍທີ່ຄ້າຍກັນຈາກຜູ້ໃຕ້ບັງຄັບບັນຊາຢ່າງເໝາະສົມ ແລະ ເປັນທຳ ເມື່ອຈຳເປັນໃຫ້ລາຍງານ ຫຼື ຂໍອະນຸມັດຈາກຜູ້ໃຕ້ບັງຄັບບັນຊາຕາມກົດລະບຽບຂອງບໍລິສັດ
- ມຸ່ງໝັ້ນທີ່ຈະສ້າງສະຖານທີ່ເຮັດວຽກທີ່ພະນັກງານສາມາດເວົ້າລົມກ່ຽວກັບເລື່ອງຕ່າງໆ ແລະ ແບ່ງປັນຄວາມຄິດເຫັນໄດ້ຢ່າງເປີດເຜີຍ
- ເມື່ອເກີດບັນຫາຂຶ້ນໃນທີ່ເຮັດວຽກໃຫ້ແກ້ບັນຫາທັນທີຫຼັງຈາກກວດສອບຂໍ້ເທັດຈິງ ແລະ ປຶກສາກັບພະແນກທີ່ຮັບຜິດຊອບເມື່ອຈຳເປັນ

## 2. ເຄົາລົບສິດທິມະນຸດ

- ນິຄອນຄໍານຶງເຖິງມາດຕະຖານສາກົນໃນການດໍາເນີນການກ່ຽວກັບສິດທິມະນຸດ ແລະ ເຄົາລົບສິດທິມະນຸດ ນິຄອນຈະບໍ່ກະທໍາການລະເມີດສິດທິມະນຸດໃດໆ ລວມເຖິງການໃຊ້ແຮງງານພາກບັງຄັບ [1] ແລະ ແຮງງານເດັກ [2]

- ນິຄອນຈະບໍ່ທໍາການລະເມີດສິດທິມະນຸດໃດໆ ແລະ ຈະບໍ່ເຂົ້າໄປມີສ່ວນຮ່ວມໃນການລະເມີດໂດຍບຸກຄົນທີສາມ ແລະ ຈະປະເມີນຄວາມສ່ຽງດ້ານສິດທິມະນຸດໃນກິດຈະກໍາທາງທຸລະກິດຂອງຕົນເຊິ່ງເປັນສ່ວນໜຶ່ງຂອງຄວາມພະຍາຍາມຢ່າງຕໍ່ເນື່ອງໃນການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບທາງລົບທີ່ລະບຸທັງໝົດ

- ພວກເຮົາຈະເຄົາລົບທຸກບຸກຄະລິກກະພາບ ແລະ ທຸກຄວາມຫຼາກຫຼາຍຂອງບຸກຄົນ ຈະພະຍາຍາມບໍ່ກະທໍາການໃດໆທີ່ເປັນການບັ່ນທອນສັກສີຄວາມເປັນມະນຸດຂອງແຕ່ລະບຸກຄົນ ແລະ ພວກເຮົາຈະບໍ່ມີສ່ວນຮ່ວມ ຫຼື ຍຸແຍ່ໃຫ້ເກີດການກະທໍາໃດໆທີ່ເປັນການລະເມີດສິດທິມະນຸດ

- ພວກເຮົາຈະຮຽກຮ້ອງໃຫ້ຜູ້ໃຫ້ບໍລິການ ແລະ ພັນທະມິດທາງທຸລະກິດຂອງພວກເຮົາບໍ່ໃຫ້ມີສ່ວນຮ່ວມໃນການກະທໍາທີ່ເປັນການລະເມີດສິດທິມະນຸດ

<u>ຫຼັກຄິດຂອງນິຄອນ</u>

- ນິຄອນຈະຈັດການກັບບັນຫາດ້ານສິດທິມະນຸດຢ່າງໃຈຈິງໃນຖານະບໍລິສັດລະດັບໂລກທີ່ມີຄວາມຮັບຜິດຊອບ
- ແຮງງານພາກບັງຄັບ ແລະ ແຮງງານເດັກຖືເປັນບັນຫາດ້ານສິດທິມະນຸດຢ່າງຮ້າຍແຮງ ພວກເຮົາຈະດໍາເນີນມາດຕະການປ້ອງກັນທີ່ພຽງພໍເພື່ອບໍ່ໃຫ້ເກີດຂຶ້ນໃນຕ່ອງໂສ້ຄຸນຄ່າຂອງພວກເຮົາ

ຄໍາອະທິບາຍສັບ

(1) ແຮງງານພາກບັງຄັບໝາຍເຖິງງານ ຫຼື ບໍລິການໃດໆກໍ່ຕາມທີ່ຖືກບັງຄັບໃຫ້ເຮັດໂດຍຢູ່ພາຍໃຕ້ການຄຸກຄາມດ້ວຍການລົງໂທດ ເຊິ່ງບຸກຄົນນັ້ນບໍ່ໄດ້ສະເໜີຕົວເຮັດເອງໂດຍສະໝັກໃຈ ເຊິ່ງໝາຍຄວາມວ່າແມ່ນແຕ່ແຮງງານຂອງລູກຈ້າງທີ່ໄດ້ຮັບຄ່າຈ້າງ ຫຼື ຄ່າຕອບແທນກໍ່ອາດຖືເປັນແຮງງານພາກບັງຄັບໄດ້ ສະຖານະການທີ່ຄົນງານບໍ່ສາມາດລາອອກໄດ້ເນື່ອງຈາກໜັງສືເດີນທາງ ຫຼື ເອກະສານປະຈໍາຕົວຂອງບຸກຄົນນັ້ນຖືກນາຍຈ້າງຍຶດເກັບໄວ້ ຫຼື ເນື່ອງຈາກຖືກນາຍຈ້າງຮຽກເກັບໜີ້ສິນຈໍານວນຫຼາຍໂດຍບໍ່ມີເຫດຜົນອັນສົມຄວນຖືວ່າເປັນການໃຊ້ແຮງງານພາກບັງຄັບເຖິງແມ່ນວ່າພວກເຂົາຈະໄດ້ຮັບຄ່າຈ້າງກໍ່ຕາມ

(2) ແຮງງານເດັກທົ່ວໄປໝາຍເຖິງແຮງງານທີ່ກ່ຽວຂ້ອງກັບເດັກອາຍຸຕໍ່າກວ່າ 15 ປີ

<u>ຫຼັກປະຕິບັດຂອງພະນັກງານ</u>

ພວກເຮົາຈະ:

- ເຄົາລົບສິດທິມະນຸດຂອງທຸກຄົນໃນລະຫວ່າງການດຳເນີນກິດຈະກຳທາງທຸລະກິດ
- ຈົ່ງລະວັງຢູ່ສະເໝີວ່າຄຳເວົ້າ ແລະ ການກະທຳຂອງເຮົາເປັນການລະເມີດສິດທິມະນຸດຂອງອີກຝ່າຍໜຶ່ງຫຼືບໍ່
- ໃນທຸກການສື່ສານພວກເຮົາຈະເຄົາລົບບຸກຄະລິກກະພາບ ແລະ ຄວາມເປັນຕົວຕົນຂອງອີກຝ່າຍໃຫ້ກຽດ ແລະ ປະຕິບັດຕໍ່ທຸກຄົນດ້ວຍທັດສະນະຄະຕິທີ່ເປັນທຳ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍດ້ານສິດທິມະນຸດຊົນຂອງນິຄອນ

## 3. ສະພາບແວດລ້ອມໃນການເຮັດວຽກທີ່ດີ ແລະ ປອດໄພ

- ນິຄອນຈະເຄົາລົບສິດທິແຮງງານຂັ້ນພື້ນຖານທີ່ກ່ຽວຂ້ອງກັບເສລີພາບໃນການສະມາຄົມ ແລະ ສິດທິໃນການຮ່ວມເຈລະຈາຕໍ່ລອງຕາມກົດໝາຍ ແລະ ຂໍ້ບັງຄັບທີ່ບັງຄັບໃຊ້ຂອງປະເທດ ແລະ ຂົງເຂດທີ່ນິຄອນດຳເນີນທຸລະກິດ

- ນິຄອນຈະເຮັດໃຫ້ເກີດຄວາມເຂົ້າໃຈກ່ຽວກັບຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການຢູ່ຮ່ວມກັນ (“DEI”) ໃນຖານະຫຼັກຄິດພື້ນຖານຢ່າງເລິກເຊິ່ງ ແລະ ຈະສົ່ງເສີມສະພາບແວດລ້ອມການເຮັດວຽກທີ່ຄຸນລັກສະນະ ແລະ ຄວາມສາມາດຂອງສະມາຊິກໃນທີມທຸກຄົນໄດ້ຮັບການຍອມຮັບ ແລະ ໃຫ້ຄຸນຄ່າ

- ນິຄອນຈະເຮັດໃຫ້ໝັ້ນໃຈວ່າມີຄວາມເປັນທຳ ແລະ ຄວາມສະເໝີພາກໃນການເຮັດວຽກລວມເຖິງການສັນຫາ ແລະ ການຄັດເລືອກບຸກຄະລາກອນ, ຄ່າຕອບແທນ ແລະ ຜົນປະໂຫຍດ ການພັດທະນາ ແລະ ການຝຶກອົບຮົມທາງວິຊາຊີບຕະຫຼອດຈົນມຸ່ງໝັ້ນທີ່ຈະພັດທະນາສະພາບແວດລ້ອມການເຮັດວຽກຢ່າງຕໍ່ເນື່ອງ ເຊິ່ງພະນັກງານສາມາດໃຊ້ຄວາມສາມາດສະເພາະຕົວ ແລະ ຈຸດແຂງຂອງຕົນໃຫ້ເກີດປະໂຫຍດສູງສຸດ

- ນິຄອນຈະບໍ່ຍອມຮັບພຶດຕິກຳໃດໆທີ່ບັ່ນທອນສັກສີ ຫຼື ບຸກຄະລິກຄະພາບຂອງບຸກຄົນໂດຍເດັດຂາດ ພຶດຕິກຳເຫຼົ່ານີ້ໄດ້ແກ່ການເລືອກປະຕິບັດຕາມຄຸນລັກສະນະ ແລະ ຄວາມແຕກຕ່າງທີ່ມີຢູ່ໃນຕົວເອົາແຕ່ລະຄົນເຊັ່ນ: ອາຍຸ, ເພດ, ສັນຊາດ, ເຊື້ອຊາດ ແລະ ຊົນເຜົ່າ, ສາສະໜາ, ຄວາມເຊື່ອຖື, ລັດທິນິຍົມທາງເພດ, ເອກກະລັກທາງເພດ, ຄວາມພິການ ຫຼື ພື້ນຖານຕະຫຼອດຈົນພຶດຕິກຳໃສ່ຮ້າຍ, ຄວາມຮຸນແຮງ, ການຂົ່ມເຫັງ ຫຼື ການຄຸກຄາມໃນຮູບແບບໃດໆ[(1)] (ເອີ້ນລວມກັນວ່າ “ການເລືອກປະຕິບັດ ແລະ ການຄຸກຄາມ”)

- ນິຄອນຈະພະຍາຍາມສົ່ງເສີມສຸຂະພາບຂອງບຸກຄະລາກອນ ແລະ ປ້ອງກັນອຸປະຕິເຫດຈາກການເຮັດວຽກ

- ນິຄອນຈະປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງກັບຊົ່ວໂມງການເຮັດວຽກຂອງແຕ່ລະປະເທດ ແລະ ຂົງເຂດທີ່ນິຄອນດຳເນີນທຸລະກິດຢູ່ ແລະ ຈະພະຍາຍາມປ້ອງກັນບໍ່ໃຫ້ມີຊົ່ວໂມງການເຮັດວຽກທີ່ຍາວນານ

ຄຳອະທິບາຍສັບ

(1) ການລ່ວງລະເມີດ ໂດຍທົ່ວໄປແລ້ວຈະໝາຍເຖິງ ພຶດຕິກຳ ແລະ ການປະຕິບັດທີ່ບໍ່ສາມາດຍອມຮັບໄດ້ ເຊິ່ງລວມເຖິງການຄຸກຄາມທີ່ຫວັງໃຫ້ເກີດ, ກໍ່ໃຫ້ເກີດ ຫຼື ອາດນຳໄປສູ່ອັນຕະລາຍເຖິງຮ່າງກາຍ, ຈິດໃຈ, ເພດ ແລະ ສະຖານະທາງການເງິນ, ລວມເຖິງການລ່ວງລະເມີດ ແລະ ຄຸກຄາມທາງເພດ ແລະ ການຖືກທຳລາຍໃນສະຖານທີ່ເຮັດວຽກເປັນຕົ້ນ

## ຫຼັກຄິດຂອງນິຄອນ

- ນິຄອນເຄົາລົບໃນຄວາມຫຼາກຫຼາຍຂອງພະນັກງານທຸກຄົນ ແລະ ມຸ່ງໝັ້ນທີ່ຈະສ້າງສະພາບແວດລ້ອມໃນການເຮັດວຽກທີ່ພະນັກງານທຸກຄົນສາມາດໃຊ້ຄວາມສາມາດ ແລະ ຈຸດແຂງທີ່ເປັນເອກະລັກຂອງຕົນເອງໃຫ້ເກີດປະໂຫຍດສູງສຸດ ນິຄອນເຊື່ອວ່າການຈັດສະພາບແວດລ້ອມການເຮັດວຽກທີ່ເຄົາລົບເຊິ່ງກັນ ແລະ ກັນ ແລະ ສາມາດແບ່ງປັນຄຸນຄ່າ ແລະ ມຸມມອງຂອງຕົນເອງໄດ້ຢ່າງອິດສະຫຼະຈະຊ່ວຍສົ່ງເສີມຄວາມສາມາດໃນການແຂ່ງຂັນຂອງນິຄອນ
- ອີງຕາມຄວາມເຊື່ອທີ່ວ່າສະພາບແວດລ້ອມໃນການເຮັດວຽກທີ່ພະນັກງານສາມາດເຮັດວຽກໄດ້ຢ່າງປອດໄພ ແລະ ມີສຸຂະພາບດີທັງກາຍ ແລະ ໃຈຈະຊ່ວຍຍົກລະດັບຊີວິດສ່ວນຕົວ ແລະ ນໍາໄປສູ່ການເພີ່ມພະລັງ ແລະ ຄວາມສາມາດຂອງອົງກອນ ດ້ວຍເຫດນີ້ນິຄອນຈະສົ່ງເສີມການຈັດການຄວາມປອດໄພ ແລະ ສະໜັບສະໜູນໃຫ້ພະນັກງານບໍາລຸງຮັກສາສຸຂະພາບຂອງຕົນຢູ່ສະເໝີ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ຄໍານຶງເຖິງອິດທິພົນຂອງການມີອະຄະຕິໂດຍບໍ່ຮູ້ໂຕ ແລະ ການຄິດເອົາເອງວ່າອາດເກີດໄດ້ ດັ່ງນັ້ນເຮົາຕັ້ງໃຈຮັບຟັງຄວາມຄິດເຫັນທີ່ແຕກຕ່າງໄປຈາກຄວາມຄິດຂອງເຮົາ
- ບໍ່ມີສ່ວນຮ່ວມໃນການກະທໍາທີ່ເປັນການເລືອກປະຕິບັດ ແລະ ການຄຸກຄາມ ແລະ ຫາກພົບວ່າການກະທໍາດັ່ງກ່າວເກີດຂຶ້ນໃຫ້ລາຍງານຕໍ່ຜູ້ບັງຄັບບັນຊາ, ພະແນກຊັບພະຍາກອນບຸກຄົນ ຫຼື ໜ່ວຍງານຮັບລາຍງານ ຫຼື ໃຫ້ຄໍາປຶກສາຂອງບໍລິສັດນັ້ນໂດຍທັນທີ
- ປະຕິບັດຕາມກົດເກນ ແລະ ຂັ້ນຕອນທີ່ກ່ຽວຂ້ອງກັບສຸຂະພາບ ແລະ ຄວາມປອດໄພທີ່ບໍລິສັດກໍານົດຂຶ້ນ ແລະ ຫາກພົບວ່າຂະບວນການເຮັດວຽກ, ການໃຊ້ງານອຸປະກອນ ຫຼື ສະຖານທີ່ເຮັດວຽກເປັນອັນຕະລາຍ ຫຼື ເປັນພິດ ໃຫ້ລາຍງານຕໍ່ຜູ້ບັງຄັບບັນຊາ ຫຼື ພະແນກທີ່ຮັບຜິດຊອບດ້ານຄວາມປອດໄພໃນທີ່ເຮັດວຽກຂອງບໍລິສັດໂດຍທັນທີ ພະຍາຍາມເຮັດໃຫ້ແນ່ໃຈວ່າສະຖານະການເຫຼົ່ານັ້ນຈະບໍ່ຖືກລະເລີຍ
- ມຸ່ງໝັ້ນທີ່ຈະປັບປຸງສຸຂະພາບຂອງເຮົາເອງໃນຖານະບຸກຄະລາກອນແຕ່ລະຄົນມີສ່ວນຮ່ວມຢ່າງແຂ່ງຂັນໃນກິດຈະກໍາດ້ານສຸຂະພາບ ແລະ ຄວາມປອດໄພ ແລະ ການຝຶກອົບຮົມທີ່ດໍາເນີນການໂດຍບໍລິສັດ ແລະ ໃຊ້ຄວາມພະຍາຍາມຮ່ວມກັນເພື່ອສ້າງສະພາບແວດລ້ອມການເຮັດວຽກທີ່ດີ ແລະ ປອດໄພດວ້ຍການສື່ສານທີ່ເປີດກວ້າງ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍສາກົນວ່າດ້ວຍການສົ່ງເສີມຄວາມຫຼາກຫຼາຍ (Diversity) ຄວາມສະເໝີພາບ (Equity) ແລະ ການຢູ່ຮ່ວມກັນ (Inclusion) ຂອງນິຄອນ

## 4. ປົກປັກຮັກສາສະພາບແວດລ້ອມທາງທໍາມະຊາດ

- ນິຄອນຈະມີສ່ວນຮ່ວມໃນທຸລະກິດທີ່ຊ່ວຍຫຼຸດຜົນກະທົບຕໍ່ສິ່ງແວດລ້ອມຂອງສັງຄົມ ແລະ ລູກຄ້າຂອງພວກເຂົາເພື່ອສະໜັບສະໜູນການບັນລຸຄວາມຍືນຍົງທາງສັງຄົມ ນິຄອນມຸ່ງໝັ້ນທີ່ຈະຫຼຸດຜົນກະທົບຕໍ່ສິ່ງແວດລ້ອມໃນທຸກຂັ້ນຕອນຂອງກິດຈະກໍາທາງທຸລະກິດລວມເຖິງການຈັດຫາວັດຖຸດິບ, ການພັດທະນາຜະລິດຕະພັນ, ການອອກແບບ, ການຜະລິດ, ການຈັດຈໍາໜ່າຍ, ການຂາຍ, ການໃຊ້ງານ, ການບໍລິການ ແລະ ການກໍາຈັດ ແລະ ຈະພະຍາຍາມຈັດຫາຜະລິດຕະພັນ ແລະ ບໍລິການທີ່ເປັນມິດຕໍ່ສິ່ງແວດລ້ອມ

- ນິຄອນມຸ່ງໝັ້ນທີ່ຈະສົ່ງເສີມຄວາມຮັບຮູ້ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມໃຫ້ກັບບຸກຄະລາກອນຍິ່ງຂຶ້ນ

- ນິຄອນຈະຊ່ວຍມຸ່ງສູ່ສັງຄົມທີ່ປາສະຈາກກາກບອນໂດຍພະຍາຍາມຫຼຸດການປ່ອຍແກັສເຮືອນແກ້ວຜ່ານການອະນຸລັກພະລັງງານ ແລະ ການນໍາພະລັງງານໝູນວຽນມາໃຊ້ຕະຫຼອດຕ່ອງໂສ້ຄຸນຄ່າ

- ນິຄອນຈະຊ່ວຍໃຫ້ບັນລຸເຖິງຊັບພະຍາກອນທີ່ໝູນວຽນໃນສັງຄົມໂດຍການໃຊ້ຊັບພະຍາກອນຢ່າງມີປະສິດທິຜົນໃນກິດຈະກໍາທາງທຸລະກິດລວມເຖິງການຫຼຸດຂອງເສຍ ແລະ ການໃຊ້ນໍ້າ ນອກຈາກນີ້ເຂົາຍັງມຸ່ງໝັ້ນທີ່ຈະຫຼຸດການໃຊ້ຊັບພະຍາກອນຕະຫຼອດຈົນການນໍາຊັບພະຍາກອນກັບມາໃຊ້ໃໝ່ ແລະ ຣີໄຊເຄີນຕະຫຼອດວົງຈອນຊີວິດທັງໝົດຂອງຜະລິດຕະພັນ

- ນິຄອນມຸ່ງໝັ້ນທີ່ຈະບັນລຸສັງຄົມທີ່ດີ ແລະ ປອດໄພຕໍ່ສິ່ງແວດລ້ອມໂດຍການຈັດການສານເຄມີທີ່ໃຊ້ໃນຜະລິດຕະພັນ ແລະ ຂະບວນການຜະລິດ ແລະ ຈະຈັດການປະຕິບັດງານຕາມມາດຕະຖານສະໝັກໃຈເຊິ່ງຢ່າງໜ້ອຍກໍ່ເຂັ້ມງວດເທົ່າໆກັນ ແລະ ບາງຄັ້ງກໍ່ເຂັ້ມງວດກວ່ານັ້ນອີກຂອງກົດໝາຍ ແລະ ຂໍ້ບັງຄັບທີ່ໃຊ້ບັງຄັບໃນປະເທດ ແລະ ຂົງເຂດທີ່ດໍາເນີນທຸລະກິດ ນອກຈາກນີ້ເຂົາຍັງມຸ່ງໝັ້ນທີ່ຈະຮັກສາລະບົບນິເວດດ້ວຍການກວດສອບໃຫ້ຊັດເຈນ ແລະ ຫຼຸດຜົນກະທົບທີ່ມີຕໍ່ລະບົບນິເວດໃຫ້ນ້ອຍທີ່ສຸດ

## ຫຼັກຄິດຂອງນິຄອນ

ການປ່ຽນແປງສະພາບພູມອາກາດ ການຂາດແຄນຊັບພະຍາກອນ ມົນລະພາວະຕໍ່ສິ່ງແວດລ້ອມ ແລະ ການສູນເສຍຄວາມຫຼາກຫຼາຍທາງຊີວະພາບກາຍເປັນບັນຫາລະດັບໂລກທີ່ຮ້າຍແຮງ ນິຄອນໃຊ້ພະລັງງານ ແລະ ຊັບພະຍາກອນເພື່ອການດຳເນີນກິດຈະກຳທາງທຸລະກິດ ແລະ ຍັງສ້າງຜົນກະທົບຕໍ່ສະພາບແວດລ້ອມໃນຮູບແບບຕ່າງໆ ເຊັ່ນ: ການປ່ອຍແກັສ, ນ້ຳເສຍ ແລະ ຂອງເສຍ ນິຄອນຄຳນຶງເຖິງເລື່ອງນີ້ ແລະ ຈະພະຍາຍາມດຳເນີນທຸລະກິດດ້ວຍຄວາມໃສ່ໃຈຕໍ່ສິ່ງແວດລ້ອມເຊັ່ນ: ການຫຼຸດການປ່ອຍແກັສເຮືອນແກ້ວ ການຜະລິດສິນຄ້າທີ່ເປັນມິດກັບສິ່ງແວດລ້ອມເຊັ່ນ: ການຈັດຊື້ ແລະ ການໃຊ້ຊັບພະຍາກອນຢ່າງຍືນຍົງເພື່ອຫຼຸດຜົນກະທົບທີ່ພວກເຮົາ ແລະ ສັງຄົມຕ້ອງພົບໃນເລື່ອງທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ນິຄອນຈະພະຍາຍາມສ້າງທຸລະກິດ ແລະ ນະວັດຕະກຳໃໝ່ທີ່ຫຼຸດຜົນກະທົບຕໍ່ສິ່ງແວດລ້ອມເຊັ່ນກັນ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ນຳມຸມມອງດ້ານສິ່ງແວດລ້ອມມາໃຊ້ ແລະ ຫາວິທີຫຼຸດຜົນກະທົບຕໍ່ສິ່ງແວດລ້ອມໃນການປະຕິບັດງານປະຈຳວັນຂອງທຸກຄົນຕະຫຼອດຈົນດຳເນີນການຢ່າງຕັ້ງໜ້າ
- ມຸ່ງໝັ້ນທີ່ຈະຫຼຸດຂອງເສຍ ແລະ ໃຊ້ພະລັງງານນ້ຳ ແລະ ຊັບພະຍາກອນອື່ນໆຢ່າງມີປະສິດທິພາບໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ໃນສະຖານທີ່ເຮັດວຽກແຕ່ລະບ່ອນ
- ອະນຸລັກພະລັງງານ ປະຕິບັດຕາມຫຼັກ 3Rs (ໃຊ້ນ້ອຍ, ໃຊ້ຊ້ຳ, ນຳກັບມາໃຊ້ໃໝ່) ແລະ ປ້ອງກັນມົນລະພາວະຕໍ່ສິ່ງແວດລ້ອມໃນການດຳເນີນງານເຊິ່ງລວມເຖິງການຈັດຊື້, ການພັດທະນາ ແລະ ອອກແບບຜະລິດຕະພັນ, ການຜະລິດ, ການຈັດຈຳໜ່າຍ, ຕະຫຼອດຈົນການຂາຍ ແລະ ການບໍລິການ
- ປະຕິບັດຕາມນະໂຍບາຍດ້ານສິ່ງແວດລ້ອມ ແລະ ກົດລະບຽບພາຍໃນບໍລິສັດ ລາຍງານການລະເມີດກົດໝາຍ ຫຼື ກົດເກນດ້ານສິ່ງແວດລ້ອມທີ່ກ່ຽວຂ້ອງໂດຍທັນທີ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ວິໄສທັດດ້ານສິ່ງແວດລ້ອມໃນໄລຍະຍາວຂອງນິຄອນ
ນະໂຍບາຍຈັດຊື້ຈັດຈ້າງເຈ້ຍຂອງນິຄອນ
ນະໂຍບາຍການຈັດຊື້ຈັດຈ້າງທີ່ເປັນມິດຕໍ່ສິ່ງແວດລ້ອມຂັ້ນພື້ນຖານຂອງນິຄອນ
ນະໂຍບາຍກິດຈະກຳດ້ານສິ່ງແວດລ້ອມຂອງນິຄອນ
ແນວປະຕິບັດກ່ຽວກັບສານເຄມີອັນຕະລາຍ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (1) ການຕໍ່ຕ້ານການໃຫ້ ແລະ ຮັບສິນບົນ ແລະ ຕໍ່ຕ້ານການທຸຈະລິດ

- ນິຄອນມີຈຸດຢືນທີ່ຕໍ່ຕ້ານການໃຫ້ ແລະ ຮັບສິນບົນ ແລະ ການທຸຈະລິດຢ່າງເດັດຂາດ ແລະ ຈະພະຍາຍາມຢ່າງເຕັມທີ່ເພື່ອປົກປ້ອງບໍ່ໃຫ້ເກີດມີການໃຫ້ສິນບົນ ແລະ ຮັບສິນບົນ ແລະ ການທຸຈະລິດ

- ພວກເຮົາຈະຫຼີກລ້ຽງພຶດຕິກຳທີ່ອາດເຮັດໃຫ້ເກີດຂໍ້ສົງໄສກ່ຽວກັບການໃຫ້ ແລະ ຮັບສິນບົນ

- ພວກເຮົາຍຶດໝັ້ນໃນການເປັນຜູ້ທີ່ມີສ່ວນຮ່ວມໃນສັງຄົມທີ່ມີຄວາມຮັບຜິດຊອບໃນທຸກປະເທດ ແລະ ຂົງເຂດທີ່ນິຄອນດຳເນີນທຸລະກິດຢູ່ໂດຍການຮັກສາຄວາມສຳພັນທີ່ດີ ແລະ ຈິງໃຈກັບໜ່ວຍງານພາກລັດ ແລະ ເຈົ້າໜ້າທີ່ຂອງລັດ, ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການຕ່າງໆ ແລະ ຫຼີກລ້ຽງການທຸຈະລິດ

<u>ຫຼັກຄິດຂອງນິຄອນ</u>

ພວກເຮົາບໍ່ຍອມຮັບການໃຫ້ ແລະ ຮັບສິນບົນ ການໃຫ້ ແລະ ຮັບສິນບົນເປັນການກະທຳທີ່ເປັນອຸປະສັກຕໍ່ການແຂ່ງຂັນເສລີ ແລະ ເປັນອຸປະສັກຕໍ່ການພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດ ແລະ ຂົງເຂດ ຫຼາຍປະເທດທົ່ວໂລກມີກົດໝາຍ ແລະ ຂໍ້ບັງຄັບທີ່ຫ້າມບໍ່ໃຫ້ມີການໃຫ້ສິນບົນເຈົ້າໜ້າທີ່ຂອງລັດ ແລະ ບຸກຄົນທີ່ປຽບເໝືອນເຈົ້າໜ້າທີ່ຂອງລັດ (ລວມແລ້ວເອີ້ນວ່າ: “ເຈົ້າໜ້າທີ່ຂອງລັດ”) ລວມທັງບຸກຄົນ ຫຼື ອົງກອນພາກເອກະຊົນ ນິຄອນຫ້າມການໃຫ້ ແລະ ຮັບສິນບົນໃນທຸກປະເທດ ແລະ ທຸກຂົງເຂດທີ່ເຮົາດຳເນີນທຸລະກິດຢູ່ ແລະ ສົ່ງເສີມກິດຈະກຳເພື່ອປ້ອງກັນການໃຫ້ ແລະ ຮັບສິນບົນກ່ອນທີ່ຈະເກີດຂຶ້ນ ນອກຈາກນີ້, ຫາກບຸກຄົນທີສາມທີ່ດຳເນີນທຸລະກິດໃຫ້ກັບນິຄອນ (ຜູ້ຈັດຈຳໜ່າຍ, ຕົວແທນ, ທີ່ປຶກສາເປັນຕົ້ນ) ມີສ່ວນຮ່ວມໃນການໃຫ້ ແລະ ຮັບສິນບົນ, ນິຄອນອາດຕ້ອງຮັບຜິດທາງກົດໝາຍດ້ວຍ ດັ່ງນັ້ນ, ເຮົາຕ້ອງມີການບໍລິຫານຈັດການບຸກຄົນທີສາມຢ່າງເໝາະສົມ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ບໍ່ສະເໜີຂອງຂວັນ, ຜົນປະໂຫຍດ ຫຼື ສິ່ງຂອງທີ່ມີມູນຄ່າແກ່ບຸກຄົນໃດກໍ່ຕາມໂດຍທາງກົງ ແລະ ທາງອ້ອມເພື່ອວັດຖຸປະສົງດັ່ງຕໍ່ໄປນີ້:
  - ເພື່ອໃຫ້ໄດ້ມາ ຫຼື ຮັກສາທຸລະກິດໃຫ້ຄົງຢູ່;
  - ເພື່ອການມີອິດທິພົນຕໍ່ການຕັດສິນໃຈທາງທຸລະກິດ ຫຼື
  - ເພື່ອຮັກສາຄວາມໄດ້ປຽບທີ່ບໍ່ເປັນທຳ
- ບໍ່ສະເໜີສິນບົນ (1) ໂດຍກົງ ຫຼື ຜ່ານບຸກຄົນທີສາມ
- ກວດສອບບຸກຄົນທີສາມທັງໝົດກ່ອນທີ່ຈະມີສ່ວນຮ່ວມໃນການໃຫ້ການບໍລິການ ແລະ ຈັດການຕາມກົດລະບຽບຂອງບໍລິສັດທີ່ກ່ຽວກັບການປ້ອງກັນການໃຫ້ ແລະ ການຮັບສິນບົນ

ຄຳອະທິບາຍສັບ

(1) ການສະເໜີສິນບົນ ຄືການໃຫ້ ຫຼື ໃຫ້ສັນຍາວ່າຈະໃຫ້ເງິນ, ຜົນປະໂຫຍດ ຫຼື ປະໂຫຍດອື່ນໃດທັງທາງກົງ ແລະ ທາງອ້ອມເພື່ອແລກກັບຄວາມໄດ້ປຽບທີ່ບໍ່ເໝາະສົມຂອງນິຄອນ ແລະ ພະນັກງານນິຄອນ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍການຕໍ່ຕ້ານການໃຫ້ ແລະ ຮັບສິນບົນຂອງນິຄອນ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (2) ການລ້ຽງຮັບຮອງ ແລະ ຂອງທີ່ລະລຶກ

- ໃນການດຳເນີນກິດຈະກຳທາງທຸລະກິດໃຫ້ກັບນິຄອນ, ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການລວມເຖິງນະໂຍບາຍຂອງນິຄອນທີ່ກ່ຽວຂ້ອງກັບການລ້ຽງຮັບຮອງ ແລະ ການໃຫ້ ແລະ ຮັບຮອງຂອງທີ່ລະລຶກຈາກລູກຄ້າ, ຜູ້ສະໜອງ, ຄູ່ຄ້າຂາຍທາງທຸລະກິດ ແລະ ຜູ້ທີ່ເຮັດທຸລະກິດຮ່ວມກັບພວກເຮົາ ພວກເຮົາຈະມີສ່ວນໃນການລ້ຽງຮັບຮອງທາງທຸລະກິດ, ການໃຫ້ ແລະ ຮັບຂອງທີ່ລະລຶກເທົ່າທີ່ຈຳເປັນ ແລະ ສົມເຫດສົມຜົນພາຍໃຕ້ບັນທັດຖານທາງທຸລະກິດ ແລະ ຈະປຶກສາຜູ້ບັງຄັບບັນຊາທັນທີ ຫາກມີຂໍ້ສົງໄສວ່າພຶດຕິກຳດັ່ງກ່າວເໝາະສົມ ຫຼື ບໍ່

- ພວກເຮົາຈະບໍ່ສະເໜີການລ້ຽງຮັບຮອງ ຫຼື ຂອງທີ່ລະລຶກໃຫ້ກັບລູກຄ້າ ຫຼື ຜູ້ອື່ນທີ່ກຳລັງເຮັດທຸລະກິດ ຫຼື ພະຍາຍາມເຂົ້າມາເລີ່ມເຮັດທຸລະກິດກັບນິຄອນ ເພື່ອແລກກັບຄວາມຊ່ວຍເຫຼືອ ຫຼື ອຳນາດໃນການຕັດສິນໃຈ ຫຼື ເມື່ອເຂົ້າໃຈວ່າຄວາມຊ່ວຍເຫຼືອ ຫຼື ອຳນາດດັ່ງກ່າວຈະຊ່ວຍໃຫ້ເກີດຄວາມເຊື່ອມໂຍງ ກັບທຸລະກຳໃດໜຶ່ງທີ່ສົ່ງຜົນຕໍ່ນິຄອນ ພວກເຮົາຈະບໍ່ຍອມຮັບການລ້ຽງຮັບຮອງ ແລະ ຂອງທີ່ລະລຶກຈາກຜູ້ສະໜອງ, ຄູ່ຄ້າຂາຍທາງທຸລະກິດ ຫຼື ຜູ້ອື່ນທີ່ກຳລັງເຮັດທຸລະກິດ ຫຼື ພະຍາຍາມເຂົ້າມາເລີ່ມເຮັດທຸລະກິດກັບນິຄອນພາຍໃຕ້ສະຖານະການທີ່ອາດຖືກຕີຄວາມໄດ້ວ່າມີຜົນກະທົບຕໍ່ການຕັດສິນໃຈໃນການດຳເນີນທຸລະກິດທີ່ກ່ຽວຂ້ອງກັບນິຄອນ

- ພວກເຮົາຈະລາຍງານການລ້ຽງຮັບຮອງ ແລະ ການໃຫ້ ແລະ ຮັບຂອງທີ່ລະລຶກຕໍ່ຜູ້ບັງຄັບບັນຊາ ແລະ ຈະປະຕິບັດຕາມນະໂຍບາຍທີ່ກ່ຽວຂ້ອງທີ່ບໍລິສັດກຳນົດໄວ້

ຄຳອະທິບາຍສັບ

(1) ການລ້ຽງຮັບຮອງ ໝາຍເຖິງການກະທຳເພື່ອເສີມສຳພັນທະພາບກັບອີກຝ່າຍໜຶ່ງເຊັ່ນ: ການລ້ຽງອາຫານ, ງານລ້ຽງ, ງານກິລາ, ຄອນເສີດ ຫຼື ການອອກຕີກອັຟ

## ຫຼັກຄິດຂອງນິຄອນ

ໃນການດຳເນີນທຸລະກິດເຮົາອາດສະເໜີການລ້ຽງຮັບຮອງ ແລະ/ຫຼື ຂອງຂວັນຂອງທີ່ລະລຶກເພື່ອຮັກສາ ແລະ ສົ່ງເສີມມິດຕະພາບ ຫຼື ເປັນສ່ວນໜຶ່ງໃນກິດຈະກຳການສານສຳພັນ ແນວໃດກໍ່ຕາມ, ການລ້ຽງຮັບຮອງທີ່ຫຼາຍເກີນໄປ ແລະ ການໃຫ້ຂອງຂວັນຂອງທີ່ລະລຶກສ່ວນຕົວອາດຖືກເບິ່ງວ່າເປັນການກະທຳເພື່ອສະແຫວງຫາຜົນປະໂຫຍດທີ່ບໍ່ເໝາະສົມ ແລະ ບໍ່ເປັນທຳ ເຊິ່ງອາດສົ່ງຜົນເສຍຕໍ່ຄວາມໜ້າເຊື່ອຖືທີ່ສັງຄົມມີຕໍ່ນິຄອນໄດ້ ນິຄອນຈະບໍ່ສະເໜີໃຫ້ ຫຼື ຮັບການລ້ຽງຮັບຮອງ ແລະ/ຫຼື ຂອງທີ່ລະລຶກເພື່ອໃຫ້ໄດ້ມາເຊິ່ງຜົນປະໂຫຍດ ຫຼື ຄວາມໄດ້ປຽບຢ່າງບໍ່ເປັນທຳ ຫຼື ເພື່ອສະໜອງຕອບຂໍ້ຮຽກຮ້ອງຂອງອີກຝ່າຍ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ບໍ່ໃຫ້ ຫຼື ຮັບການລ້ຽງຮັບຮອງ ແລະ/ຫຼື ຂອງທີ່ລະລຶກເພື່ອແລກກັບຄວາມຊ່ວຍເຫຼືອ ຫຼື ອຳນາດໃນການຕັດສິນໃຈທາງທຸລະກິດທີ່ກ່ຽວຂ້ອງກັບນິຄອນ
- ກວດສອບກົດການປ້ອງກັນການໃຫ້ ແລະ ຮັບສິນບົນຂອງບໍລິສັດ ຫຼື ແນວປະຕິບັດທີ່ກ່ຽວຂ້ອງກັບການຈຳກັດວົງເງິນ ຄວາມຖີ່ ແລະ ໄລຍະເວລາໃນການໃຫ້ການລ້ຽງຮັບຮອງ ແລະ/ຫຼື ຂອງທີ່ລະລຶກກ່ອນທີ່ຈະໃຫ້ ຫຼື ຮັບການລ້ຽງຮັບຮອງ ແລະ/ຫຼື ຂອງທີ່ລະລຶກ
- ຂໍອະນຸມັດໃນການໃຫ້ ຫຼື ຮັບການລ້ຽງຮັບຮອງ ແລະ/ຫຼື ຂອງທີ່ລະລຶກຈາກຜູ້ບັງຄັບບັນຊາກ່ອນດຳເນີນການ, ລາຍງານຜົນຫຼັງດຳເນີນການຕາມກົດ ຫຼື ແນວທາງປະຕິບັດການປ້ອງກັນການໃຫ້ ແລະ ຮັບສິນບົນຂອງບໍລິສັດໂດຍຜູ້ທີ່ຍັງຄັບບັນຊາຈະອະນຸມັດ ຫຼື ປະຕິເສດຄຳຮ້ອງຂໍຕາມກົດ ແລະ ມາດຕະຖານຂອງບໍລິສັດເຊັ່ນກັນ
- ບັນທຶກບັນຊີທີ່ກ່ຽວຂ້ອງກັບການໃຫ້ ຫຼື ຮັບການລ້ຽງຮັບຮອງ ແລະ/ຫຼື ຂອງທີ່ລະລຶກໃຫ້ຖືກຕ້ອງຕາມຄວາມເປັນຈິງ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍຕໍ່ຕ້ານການໃຫ້ ແລະ ຮັບສິນບົນຂອງນິຄອນ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

(3) ຄວາມສຳພັນກັບຜູ້ສະໜອງ ແລະ ຄູ່ຄ້າທາງທຸລະກິດ

- ພວກເຮົາຈະເລືອກຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດຢ່າງເໝາະສົມ ແລະ ເປັນທຳຕາມຄຸນນະພາບ, ຄວາມສາມາດໃນການແຂ່ງຂັນດ້ານຕົ້ນທຶນ, ເວລາໃນການຜະລິດ ແລະ ເກນວັດຖຸປະສົງອື່ນໆ ພວກເຮົາຈະວາງຄວາມສຳພັນຂອງເຮົາກັບຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດໄວ້ບົນຄວາມຖືກຕ້ອງຕາມກົດໝາຍ ແລະ ປະຕິບັດຕໍ່ກັນຢ່າງເປັນມິດ ຜົນສຳເລັດ ແລະ ເປັນທຳ

- ພວກເຮົາຈະບໍ່ໃຊ້ຕຳແໜ່ງທາງທຸລະກິດຂອງນິຄອນບີບບັງຄັບໃຫ້ຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດຕົກຢູ່ໃນສະພາບທີ່ຕ້ອງເຮັດຜິດຈັນຍາບັນ ຫຼື ເກີດການເສຍປຽບໂດຍເຂົ້າໄປມີສ່ວນໃນການທຸຈະລິດ ຫຼື ສະແຫວງຫາຜົນປະໂຫຍດສ່ວນຕົວ

- ນິຄອນຄາດຫວັງໃຫ້ຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດຂອງພວກເຮົາປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງຂໍ້ຕົກລົງຕາມສັນຍາ ແລະ ປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບຂອງແຕ່ລະປະເທດທີ່ພວກເຮົາເຂົ້າໄປດຳເນີນທຸລະກິດ

<u>ຫຼັກຄິດຂອງນິຄອນ</u>

ນິຄອນເຮັດວຽກຮ່ວມກັບຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດເພື່ອຍົກລະດັບຄຸນຄ່າຂອງສິນຄ້າ ແລະ ການແກ້ໄຂທີ່ເປັນປະໂຫຍດຕໍ່ສັງຄົມ ຄວາມສຳພັນນີ້ຕ້ອງບໍ່ເປັນເຫດໃຫ້ເກີດຄວາມຂັດແຍ່ງທາງຜົນປະໂຫຍດ ຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດໝາຍຄວາມລວມເຖິງທຸກບໍລິສັດທີ່ກ່ຽວຂ້ອງກັບຕ່ອງໂສ້ການສະໜອງໃນແຕ່ລະປະເທດທີ່ພວກເຮົາເຂົ້າໄປປະກອບທຸລະກິດດ້ວຍ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ເລືອກຜູ້ໃຫ້ບໍລິການໂດຍອ້າງອີງການປຽບທຽບ/ການປະເມີນໂດຍໃຊ້ເກນທີ່ທ່ຽງທຳ ແລະ ຄຳນຶງເຖິງເງື່ອນໄຂຕ່າງໆເຊັ່ນ: ລາຄາ, ເທັກໂນໂລຢີຄຸນນະພາບ, ການສົ່ງມອບ, ຄວາມໝັ້ນຄົງໃນການຈັດຫາ ແລະ ການບໍລິການ
- ທຳຄວາມເຂົ້າໃຈວ່າໂດຍປົກກະຕິແລ້ວຝ່າຍທີ່ເປັນຜູ້ຈັດຊື້ຈັດຫາຈະຢູ່ໃນຖານະທີ່ໄດ້ປຽບກວ່າຝ່າຍຜູ້ຂາຍ ຫຼື ຜູ້ຮັບດຳເນີນການໃຫ້ ແລະ ຈະບໍ່ຮຽກຮ້ອງໃຫ້ມີການລ້ຽງຮັບຮອງ ແລະ/ຫຼື ມອບຂອງຂວັນ ບໍ່ຂໍຮັບຜົນປະໂຫຍດສ່ວນຕົວໂດຍໃຊ້ຄວາມໄດ້ປຽບທາງສະຖານະການດັ່ງກ່າວ
- ປະຕິບັດດ້ວຍຄວາມເປັນທຳ ແລະ ໂປ່ງໃສເມື່ອຕິດຕໍ່ທຸລະກິດກັບຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດ
- ພະຍາຍາມສ້າງຄວາມສຳພັນທີ່ໄວ້ວາງໃຈກັບພັນທະມິດທາງທຸລະກິດຂອງພວກເຮົາເປັນປະຈຳທຸກວັນເພື່ອໃຫ້ໝັ້ນໃຈວ່າການຈັດຊື້ຈັດຈ້າງມີສະຖຽນລະພາບ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍການຈັດຊື້ຈັດຈ້າງຂັ້ນພື້ນຖານຂອງນິຄອນ
ມາດຕະຖານການຈັດຊື້ຈັດຈ້າງຂອງນິຄອນ CSR
ນະໂຍບາຍການຈັດຊື້ຈັດຈ້າງທີ່ເປັນມິດຕໍ່ສິ່ງແວດລ້ອມຂັ້ນພື້ນຖານຂອງນິຄອນ
ມາດຕະຖານການຈັດຊື້ຈັດຈ້າງທີ່ເປັນມິດຕໍ່ສິ່ງແວດລ້ອມຂອງນິຄອນ
ນະໂຍບາຍກິດຈະກຳດ້ານສິ່ງແວດລ້ອມຂອງນິຄອນ
ແນວປະຕິບັດກ່ຽວກັບສານເຄມີອັນຕະລາຍ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (4) ຄວາມຮັບຜິດຊອບຕໍ່ສັງຄົມໃນຕ່ອງໂສ້ການສະໜອງ

ຄວາມຕັ້ງໃຈຈິງຂອງພວກເຮົາປະການໜຶ່ງຄື ການສົ່ງເສີມຄວາມຮັບຜິດຊອບຕໍ່ສັງຄົມໃນຕ່ອງໂສ້ການສະໜອງຂອງນິຄອນ, ພວກເຮົາຄາດຫວັງໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂາຍທາງທຸລະກິດຂອງພວກເຮົາຍຶດໝັ້ນໃນການປະພຶດຕາມຈັນຍາບັນທຸລະກິດເຊັ່ນດຽວກັບທີ່ນິຄອນປະຕິບັດຕາມທີ່ລະບຸໄວ້ໃນຫຼັກຈັນຍາບັນ ນອກຈາກນີ້, ພວກເຮົາຍັງຄາດຫວັງໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂອງພວກເຮົາຮັກສາມາດຕະຖານຕົ້ນຕໍທີ່ກຳນົດໄວ້ໃນຈັນຍາບັນສະບັບນີ້ລວມເຖິງນະໂຍບາຍຂອງນິຄອນ ທີ່ກ່ຽວຂ້ອງກັບການປະຕິບັດຕາມກົດໝາຍ, ເຄົາລົບໃນສິດທິມະນຸດ, ສ້າງສະພາບແວດລ້ອມທີ່ດີໃນການເຮັດວຽກ, ປົກປ້ອງສະພາບແວດລ້ອມທາງທຳມະຊາດ ລວມເຖິງການລັງສັນຜະລິດຕະພັນ ແລະ ບໍລິການທີ່ມີຄວາມປອດໄພ

### ຫຼັກຄິດຂອງນິຄອນ

ນິຄອນຕ້ອງສະແດງຄວາມຮັບຜິດຊອບຂອງຕົນເອງຕໍ່ສັງຄົມໃນທຸກໆດ້ານທີ່ກ່ຽວຂ້ອງກັບສິນຄ້າ ແລະ ບໍລິການທີ່ບໍລິສັດນຳສະເໜີ ທັງນີ້ເພາະບໍລິສັດມີບົດບາດຢ່າງຫຼວງຫຼາຍໃນການແກ້ໄຂບັນຫາທາງສັງຄົມອັນສືບເນື່ອງມາຈາກໂລກາວິວັດທາງເສດຖະກິດ ແລະ ຂໍ້ເທັດຈິງທີ່ວ່າບັນຫາບາງປະການກໍ່ບໍ່ສາມາດແກ້ໄຂໄດ້ດ້ວຍລັດຖະບານເທົ່ານັ້ນ ນິຄອນຈະສະແດງຄວາມຮັບຜິດຊອບຕໍ່ສັງຄົມໂດຍຂະຫຍາຍຂອບເຂດໄປຍັງຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດຂອງນິຄອນດ້ວຍ ນິຄອນມີພັນທະສັນຍາບໍ່ພຽງແຕ່ກັບຜູ້ໃຫ້ບໍລິການ ແລະ ພັນທະມິດທາງທຸລະກິດເທົ່ານັ້ນແຕ່ຍັງລວມເຖິງສັງຄົມໂດຍລວມດ້ວຍເຊັ່ນກັນ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ດຳເນີນການເພື່ອໃຫ້ເຂົ້າໃຈບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ສັງຄົມຂອງເຮົາໃນຕ່ອງໂສ້ການສະໜອງທີ່ກ່ຽວຂ້ອງກັບສິນຄ້າ ແລະ ບໍລິການຂອງນິຄອນ
- ພະແນກທີ່ກ່ຽວຂ້ອງກັບທຸລະກຳການຈັດຊື້ຈັດຈ້າງຈະຕ້ອງເຂົ້າໃຈ ແລະ ປະຕິບັດຕາມນະໂຍບາຍການຈັດຊື້ຈັດຈ້າງຂັ້ນພື້ນຖານຂອງນິຄອນ ແລະ ມາດຕະຖານອື່ນໆທີ່ບັງຄັບໃຊ້ ແລະ ພະຍາຍາມສື່ສານ ແລະ ຮັບຮອງການປະຕິບັດຕາມມາດຕະຖານເຫຼົ່ານີ້ກັບຜູ້ໃຫ້ບໍລິການ ແລະ ພັນທະມິດທາງທຸລະກິດ
- ທຳຄວາມເຂົ້າໃຈແນວທາງຂອງນິຄອນ ແລະ ສາມາດຕອບສະໜອງຕໍ່ການສອບຖາມຂໍ້ມູນທີ່ເຮົາອາດໄດ້ຮັບຈາກບຸກຄະລາກອນພາຍນອກນິຄອນເຊັ່ນ: ຈາກລູກຄ້າສຳລັບພະແນກທີ່ບໍ່ກ່ຽວຂ້ອງກັບການຈັດຊື້ຈັດຈ້າງ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍການຈັດຊື້ຈັດຈ້າງຂັ້ນພື້ນຖານຂອງນິຄອນ
ມາດຕະຖານການຈັດຊື້ຈັດຈ້າງຂອງນິຄອນ CSR
ນະໂຍບາຍການຈັດຊື້ຈັດຈ້າງທີ່ເປັນມິດຕໍ່ສິ່ງແວດລ້ອມຂັ້ນພື້ນຖານຂອງນິຄອນ
ມາດຕະຖານການຈັດຊື້ຈັດຈ້າງທີ່ເປັນມິດຕໍ່ສິ່ງແວດລ້ອມຂອງນິຄອນ
ນະໂຍບາຍການຊື້ຈັດຫາແຮ່ທາດຢ່າງມີຄວາມຮັບຜິດຊອບ
ນະໂຍບາຍກິດຈະກຳດ້ານສິ່ງແວດລ້ອມຂອງນິຄອນ
ແນວປະຕິບັດກ່ຽວກັບສານເຄມີອັນຕະລາຍ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

(5) ການແລ່ນທາ ແລະ ການບໍລິຈາກສະໜັບສະໜຸນກິດຈະກຳທາງ
ການເມືອງ

ນິຄອນຈະປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງກັບການແລ່ນທາ(1) ແລະ ການບໍລິຈາກສະໜັບສະໜຸນກິດຈະກຳການເມືອງໃນປະເທດທີ່ນິຄອນດຳເນີນທຸລະກິດຢູ່

### ຫຼັກຄິດຂອງນິຄອນ

ປະເທດສ່ວນໃຫຍ່ມີກົດໝາຍ ແລະ ຂໍ້ບັງຄັບທີ່ເຂັ້ມງວດກ່ຽວກັບການແລ່ນທາ ແລະ ການບໍລິຈາກສະໜັບສະໜຸນກິດຈະກິດທາງການເມືອງ ນິຄອນຈະກວດສອບ
ແລະ ປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບເຫຼົ່ານີ້

### ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ຂໍຄຳປຶກສາ ແລະ ຂໍໃຫ້ມີການກວດສອບຈາກພະແນກກົດໝາຍພາຍໃນປະເທດນັ້ນໆໃນເລື່ອງຂອງກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງກ່ອນຈະເຮັດການແລ່ນທາ ຫຼື ບໍລິຈາກເພື່ອສະໜັບສະໜຸນກິດຈະກຳທາງການເມືອງ

ຄຳອະທິບາຍສັບ

(1) ການແລ່ນທາ ໝາຍເຖິງກິດຈະກຳສ່ວນຕົວທີ່ດຳເນີນການໂດຍບຸກຄົນ ຫຼື ອົງກອນເພື່ອການໄດ້ມາເຊິ່ງອຳນາດຊີ້ນຳ (ໃນທາງການເມືອງ)

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (6) ການແຂ່ງຂັນ ແລະ ດຳເນີນທຸລະກິດຢ່າງເປັນທຳ

- ພວກເຮົາຈະແຂ່ງຂັນຢ່າງຈິງຈັງໃນຕະຫຼາດບົນຫຼັກການຂອງການແຂ່ງຂັນທີ່ເປັນທຳ ແລະ ເສລີ ແລະ ປະຕິບັດຕາມກົດໝາຍການຕໍ່ຕ້ານການຜູກຂາດ ແລະ ກົດໝາຍທີ່ກ່ຽວຂ້ອງກັບການແຂ່ງຂັນທາງການຄ້າອື່ນໆໃນທຸກແຫ່ງທີ່ພວກເຮົາດຳເນີນທຸລະກິດ

- ພວກເຮົາຈະບໍ່ເຂົ້າສູ່ຂໍ້ຕົກລົງໃດໆບໍ່ວ່າຈະແບບເປັນທາງການ ຫຼື ບໍ່ເປັນທາງການ ເປັນລາຍລັກອັກສອນ ຫຼື ດ້ວຍວາຈາກັບຄູ່ແຂ່ງທີ່ກຳນົດລາຄາສິນຄ້າ ຫຼື ບໍລິການຢ່າງບໍ່ເປັນທຳ ຄູ່ແຂ່ງທີ່ກຳນົດການແບ່ງສ່ວນຕະຫຼາດ ຫຼື ການແບ່ງສ່ວນລູກຄ້າ ຄູ່ແຂ່ງທີ່ແຊກແຊງການແຂ່ງຂັນເສລີ ຫຼື ຂັດຂວາງການຊື້ຂາຍໂດຍປາສະຈາກເຫດຜົນອັນສົມຄວນ

- ພວກເຮົາເຄົາລົບໃນສັນຍາທີ່ນິຄອນເຮັດກັບລູກຄ້າຜູ້ໃຫ້ບໍລິການ ແລະ ຄູ່ຄ້າທາງທຸລະກິດດ້ວຍການປະຕິບັດຕາມເງື່ອນໄຂຂອງສັນຍາເຫຼົ່ານີ້

<u>ຫຼັກຄິດຂອງນິຄອນ</u>

ການແຂ່ງຂັນໃນຕະຫຼາດເສລີ ແລະ ເປັນທຳຈະສົ່ງຜົນໃຫ້ສິນຄ້າ ແລະ ບໍລິການມີຄຸນນະພາບສູງຂຶ້ນລາຄາເໝາະສົມຂຶ້ນ ແລະ ສົ່ງເສີມການເຕີບໃຫຍ່ ແລະ ພັດທະນາສັງຄົມ ຂໍ້ຈຳກັດທີ່ບໍ່ເໝາະສົມໃນຕະຫຼາດແຂ່ງຂັນເສລີ ແລະ ເປັນທຳ ເປັນສິ່ງຕ້ອງຫ້າມຕາມກົດໝາຍການແຂ່ງຂັນທາງການຄ້າຂອງທຸກປະເທດ (ກົດໝາຍເຫຼົ່ານີ້ໃນບາງປະເທດອາດເອີ້ນວ່າກົດໝາຍຕໍ່ຕ້ານການຜູກຂາດ) ນິຄອນຈະບໍ່ຍອມດຳເນີນການໃດໆທີ່ເປັນການຝ່າຝືນກົດໝາຍການແຂ່ງຂັນທາງການຄ້າທັງໃນປະເທດ ແລະ ລະຫວ່າງປະເທດ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ລະມັດລະວັງໃນການແລກປ່ຽນຂໍ້ມູນກັບຄູ່ແຂ່ງ ແລະ ບໍ່ເຂົ້າໄປມີສ່ວນຮ່ວມໃນກິດຈະກຳທີ່ນຳໄປສູ່ຂໍ້ສົງໄສວ່າເຮົາເປັນສ່ວນໜຶ່ງ ຫຼື ກ່ຽວຂ້ອງກັບການສົມຮູ້ຮ່ວມຄິດກັນ (cartel(1))
- ກວດສອບໃຫ້ແນ່ໃຈວ່າໜ່ວຍງານທີ່ຕິດຕໍ່ງານກັບບຸກຄົນພາຍນອກ ຫຼື ບຸກຄົນທີສາມມີຄວາມເຂົ້າໃຈ ແລະ ປະຕິບັດຕາມຂໍ້ກຳນົດພື້ນຖານຕາມກົດໝາຍ ແລະ ລະບຽບຂໍ້ບັງຄັບທີ່ກ່ຽວຂ້ອງ ແລະ ຮູ້ວ່າກິດຈະກຳທາງທຸລະກິດໃດທີ່ອາດຖືວ່າຜິດກົດໝາຍໄດ້
- ບໍ່ເຂົ້າໄປກ້າວກ່າຍການກຳນົດລາຄາຂາຍຍ່ອຍ ລາຄາຄວນຖືກກຳນົດໂດຍກົນໄກຕະຫຼາດ
- ເນື່ອງຈາກກົດໝາຍການແຂ່ງຂັນທາງການຄ້າມີຄວາມຊັບຊ້ອນ ແລະ ຕ້ອງອາໄສຄວາມຊ່ຽວຊານເມື່ອມີຂໍ້ສົງໄສ ຫຼື ຂໍ້ກັງວົນໃນການດຳເນີນທຸລະກິດຈຶ່ງບໍ່ຄວນດຳເນີນການເອງໂດຍບໍ່ປຶກສາ ແລະ ກວດສອບກັບຝ່າຍກົດໝາຍ

ຄຳອະທິບາຍສັບ

(1) ຄາຣ໌ເທລ (ສະມາຄົມທຸລະກິດທີ່ຜິດກົດໝາຍ) ຄືສະມາຄົມທຸລະກິດອິດສະຫຼະທີ່ຕັ້ງຂຶ້ນເພື່ອຈຳກັດການແຂ່ງຂັນຂອງທຸລະກິດໜຶ່ງໆ ໃຫ້ໄດ້ຜົນໂດຍການລວມຕົວກັນຢຸດຢັ້ງກິດຈະກຳທາງການແຂ່ງຂັນດ້ວຍວິທີການດັ່ງຕໍ່ໄປນີ້:
- ການກຳນົດລາຄາຮ່ວມກັນ (price cartel)
- ການຈຳກັດການຜະລິດ ຫຼື ຈຳກັດປະລິມານການຂາຍ (supply cartel)
- ການຈຳກັດລູກຄ້າ (customer restriction cartel)

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (7) ການຄວບຄຸມການນຳເຂົ້າ ແລະ ສົ່ງອອກ

ໃນການດຳເນີນທຸລະກຳລະຫວ່າງປະເທດ, ບໍ່ວ່າຈະເປັນທຸລະກຳທີ່ກ່ຽວຂ້ອງກັບສິ່ງທີ່ຈັບຕ້ອງໄດ້ ຫຼື ຈັບຕ້ອງບໍ່ໄດ້ເຊັ່ນ: ຜະລິດຕະພັນ ຫຼື ສ່ວນປະກອບ ຫຼື ຂໍ້ມູນທາງເຕັກນິກ, ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄວບຄຸມການສົ່ງອອກ, ການສົ່ງຄືນ ແລະ ການຄວບຄຸມການນຳເຂົ້າ ແລະ ແຈ້ງຂໍ້ມູນທີ່ເປັນຈິງໃນການດຳເນີນຂັ້ນຕອນໃນການສົ່ງອອກ ແລະ ນຳເຂົ້າຕໍ່ໜ່ວຍງານທີ່ກ່ຽວຂ້ອງ

#### ຫຼັກຄິດຂອງນິຄອນ

ນິຄອນຈະປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງໃນແຕ່ລະປະເທດ ແລະ ຂົງເຂດ ເພື່ອຄົງໄວ້ເພື່ອສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງປະເທດຜ່ານການຄວບຄຸມການສົ່ງອອກໃນດ້ານການນຳເຂົ້າ, ນິຄອນຈະປະຕິບັດຕາມພັນທະກຳລະນີທາງດ້ານພາສີອາກອນຜ່ານພິທີການທາງດ້ານພາສີອາກອນ ແລະ ການສະແດງລາຍການຢ່າງຖືກຕ້ອງ ແລະ ຈະປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບຂອງແຕ່ລະປະເທດ ແລະ ຂົງເຂດຢ່າງເຂັ້ມງວດ

#### ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ເຮັດທຸລະກຳກັບລູກຄ້າ ຫຼື ຄູ່ຄ້າພາຍຫຼັງຈາກທີ່ໄດ້ມີການກວດສອບຂໍ້ມູນຂອງລູກຄ້າ ຫຼື ຄູ່ຄ້າ ແລະ ຜ່ານການອະນຸມັດໂດຍຜູ້ມີອຳນາດໃນການຕັດສິນໃຈແລ້ວເທົ່ານັ້ນ ຫາກເກີດຂໍ້ສົງໄສກ່ຽວກັບຄວາມປອດໄພໃນການຄວບຄຸມການສົ່ງອອກ, ເຖິງຈະເປັນລູກຄ້າທີ່ເຄີຍເຮັດທຸລະກຳຮ່ວມກັນມາເປັນໄລຍະເວລານານ ຫຼື ລູກຄ້າໄດ້ສົ່ງຄຳສັ່ງຊື້ມາແລ້ວກໍ່ຕາມ
- ຫາກຮູ້ວ່າສິນຄ້າຕ້ອງຫ້າມຈະຖືກສົ່ງອອກໄປຕ່າງປະເທດຜ່ານພັນທະມິດທຸລະກິດພາຍໃນປະເທດເຖິງວ່າຈະເປັນການສົ່ງສິນຄ້າພາຍໃນປະເທດກໍ່ຕາມ, ໃຫ້ກວດສອບໃຫ້ແນ່ໃຈວ່າປາຍທາງການສົ່ງອອກສິນຄ້າບໍ່ມີຂໍ້ຫ້າມຕາມມາດຕະການຄວບຄຸມທາງການຄ້າເພື່ອຄວາມປອດໄພ ຫຼື ບໍ່ໄດ້ຢູ່ພາຍໃຕ້ມາດຕະການຂວ້ຳບາດທາງເສດຖະກິດ ຫຼື ລະງັບການສົ່ງອອກ
- ປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ ແລະ ລາຍງານລາຄາຢ່າງຖືກຕ້ອງ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (8) ພາສີອາກອນ

ນິຄອນເປັນຜູ້ທີ່ມີສ່ວນຮ່ວມໃນສັງຄົມທີ່ຮັບຜິດຊອບໃນການປະຕິບັດຕາມກົດໝາຍ ແລະ ລະບຽບການດ້ານພາສີອາກອນທີ່ກ່ຽວຂ້ອງ ພວກເຮົາສະໜັບສະໜູນການເຈລະຈາທີ່ເປີດກວ້າງ ແລະ ຈິງໃຈລະຫວ່າງເຈົ້າໜ້າທີ່ດ້ານພາສີອາກອນຂອງລັດ ແລະ ທຸລະກິດ ແລະ ຈະພະຍາຍາມຢ່າງຕັ້ງໜ້າທີ່ຈະແກ້ໄຂບັນຫາ ຫຼື ຂໍ້ຂັດແຍ່ງຫາກມີຄວາມເຫັນທີ່ແຕກຕ່າງກັບເຈົ້າໜ້າທີ່ຂອງລັດ

<u>ຫຼັກຄິດຂອງນິຄອນ</u>

ໃນຖານະບໍລິສັດທີ່ມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການເສຍພາສີອາກອນໃນພື້ນທີ່ທີ່ເຮົາປະກອບທຸລະກິດ ນິຄອນຈະຊຳລະພາສີທີ່ກ່ຽວຂ້ອງທັງໝົດຕາມກົດໝາຍຂອງແຕ່ລະປະເທດ ຫຼື ຂົງເຂດ ນິຄອນຈະໃຫ້ຄວາມຮ່ວມມືຢ່າງເຕັມທີ່ຫາກຖືກກວດສອບພາສີໂດຍເຈົ້າໜ້າທີ່ຂອງລັດ

<u>ຫຼັກປະຕິບັດຂອງພະນັກງານ</u>

ພວກເຮົາຈະ:

- ກວດສອບເພື່ອໃຫ້ແນ່ໃຈວ່າການເຮັດທຸລະກຳ ແລະ ການດຳເນີນທຸລະກິດປະຈຳວັນຂອງເຮົາໄດ້ປະຕິບັດຕາມກົດໝາຍພາສີອາກອນຂອງປະເທດ ຫຼື ຂົງເຂດນັ້ນໆ
- ໃນລະຫວ່າງການກວດສອບພາສີ, ເຮົາຈະໃຫ້ຄວາມຮ່ວມມື ແລະ ຕອບຄຳຖາມຕາມຄວາມເປັນຈິງ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍພາສີລະຫວ່າງປະເທດ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (9) ການປ້ອງກັນການໃຊ້ປະໂຫຍດຈາກຂໍ້ມູນພາຍໃນເພື່ອການຊື້ຂາຍຫຼັກຊັບ

**ພວກເຮົາຈະບໍ່ເຮັດການຊື້ຂາຍຫຼັກຊັບໂດຍໃຊ້ຂໍ້ມູນພາຍໃນທີ່ເປັນຄວາມລັບເຊິ່ງເປັນຂໍ້ມູນທີ່ບໍ່ເປີດເຜີຍຕໍ່ສາທາລະນະ**

#### ຫຼັກຄິດຂອງນິຄອນ

ພະນັກງານອາດໄດ້ຮັບຂໍ້ມູນກ່ຽວກັບນິຄອນ ຫຼື ບໍລິສັດຈົດທະບຽນອື່ນໃນລະຫວ່າງການປະຕິບັດງານກ່ອນທີ່ຂໍ້ມູນເຫຼົ່ານັ້ນຈະຖືກເປີດເຜີຍສູ່ສາທາລະນະ, ພະນັກງານຕ້ອງບໍ່ຊື້ ຫຼື ຂາຍຫຼັກຊັບບໍ່ວ່າໂດຍທາງກົງ ຫຼື ທາງອ້ອມດ້ວຍປະໂຫຍດຈາກຂໍ້ມູນດັ່ງກ່າວ, ການກະທຳເຊັ່ນນັ້ນຖືເປັນການໃຊ້ປະໂຫຍດຈາກຂໍ້ມູນພາຍໃນເພື່ອການຊື້ຂາຍຫຼັກຊັບ ແລະ ເປັນການກະທຳທີ່ຜິດກົດໝາຍ ນິຄອນຈະພະຍາຍາມປ້ອງກັນບໍ່ໃຫ້ເກີດການໃຊ້ປະໂຫຍດຈາກຂໍ້ມູນພາຍໃນເພື່ອການຊື້ຂາຍຫຼັກຊັບ

#### ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ບໍ່ເຮັດການຊື້ຂາຍຫຸ້ນຂອງນິຄອນ ຫຼື ບໍລິສັດອື່ນໂດຍອາໄສຂໍ້ມູນສຳຄັນທີ່ຍັງບໍ່ເປີດເຜີຍສູ່ສາທາລະນະ(1), ບໍ່ແນະນຳໃຫ້ຄົນອື່ນເຮັດ ຫຼື ໃຫ້ຂໍ້ມູນທີ່ຍັງບໍ່ເປີດເຜີຍຕໍ່ສາທາລະນະແກ່ຜູ້ອື່ນ
- ຮັກສາຄວາມລັບຂອງຂໍ້ມູນຂອງບໍລິສັດ ຍົກເວັ້ນແຕ່ໃນກໍລະນີທີ່ຈຳເປັນຕ້ອງເປີດເຜີຍເພື່ອປະໂຫຍດໃນການດຳເນີນທຸລະກິດ ແລະ ຈະບໍ່ເປີດເຜີຍຂໍ້ມູນແກ່ບຸກຄົນທີສາມໂດຍບໍ່ໄດ້ຮັບອະນຸຍາດ

ຄຳອະທິບາຍສັບ

(1) ຕໍ່ໄປນີ້ຖືເປັນຕົວຢ່າງຂອງຂໍ້ມູນສຳຄັນທີ່ຍັງບໍ່ເປີດເຜີຍຕໍ່ສາທາລະນະ:

- ຂໍ້ມູນທາງການເງິນ
- ຂໍ້ມູນກ່ຽວກັບການວິໄຈ ແລະ ພັດທະນາຜະລິດຕະພັນໃໝ່ ແລະ ເທັກໂນໂລຢີໃໝ່
- ຂໍ້ມູນກ່ຽວກັບການຄວບຄຸມກິດຈະການກັບບໍລິສັດອື່ນ ຫຼື ຂໍ້ມູນການໂອນທຸລະກິດ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (10) ການໃຊ້ ແລະ ການຈັດການຊັບສິນຂອງນິຄອນຢ່າງເໝາະສົມ

ພວກເຮົາຈະຮັບຜິດຊອບຕໍ່ການນຳໃຊ້ ແລະ ການຈັດການຊັບສິນຂອງນິຄອນຢ່າງເໝາະສົມ ເຊິ່ງລວມເຖິງອາຄານ, ສຳນັກງານ, ສິ່ງອຳນວຍຄວາມສະດວກ, ອຸປະກອນ, ເງິນ, ສິນຄ້າຄ້າງສາງ, ຜະລິດຕະພັນ, ຂໍ້ມູນຂ່າວສານ, ຊັບສິນ ທາງປັນຍາ ແລະ ຊອບແວ ແລະ ຈະດຳເນີນການຕາມຂັ້ນຕອນທີ່ເໝາະສົມ ເພື່ອໃຫ້ໝັ້ນໃຈໄດ້ວ່າ ຊັບສິນຂອງນິຄອນຈະໄດ້ຮັບການປົກປ້ອງຈາກການສູນຫາຍ, ການຖືກທຳລາຍ, ການໂຈນລະກຳ, ການເປີດເຜີຍ ຫຼື ຖືກນຳໃຊ້ຜິດວັດຖຸປະສົງ ພວກເຮົາຈະບໍ່ນຳໃຊ້ຊັບສິນຂອງນິຄອນເພື່ອຈຸດປະສົງສ່ວນຕົວ ຫຼື ຈຸດປະສົງທີ່ທຸຈະລິດ

<u>ຫຼັກຄິດຂອງນິຄອນ</u>

ນິຄອນເປັນເຈົ້າຂອງຊັບສິນທີ່ມີມູນຄ່າທາງເສດຖະກິດເຊິ່ງຈຳເປັນຕໍ່ການດຳເນີນງານຂອງບໍລິສັດບໍ່ວ່າຈະເປັນອາຄານ, ສຳນັກງານ, ສິ່ງອຳນວຍຄວາມສະດວກ, ອຸປະກອນ, ເງິນສົດ, ສິນຄ້າຄ້າງສາງ ແລະ ຊັບສິນທາງປັນຍາ ນິຄອນຈະຈັດການຊັບສິນເຫຼົ່ານີ້ຢ່າງເໝາະສົມເພື່ອປ້ອງກັນ ການສູນຫາຍ, ການໂຈນລະກຳ ຫຼື ການໃຊ້ງານຜິດວັດຖຸປະສົງ ແລະ ໃຊ້ສະເພາະເພື່ອວັດຖຸປະສົງທາງທຸລະກິດທີ່ຕັ້ງໃຈໄວ້ເທົ່ານັ້ນ ນິຄອນຈະຈັດການ ແລະ ໃຊ້ຊັບສິນເຫຼົ່ານີ້ຢ່າງມີຄວາມຮັບຜິດຊອບ ແລະ ບັນທຶກໄວ້ໃນບັນຊີແຍກປະເພດຢ່າງຖືກຕ້ອງເພື່ອຄວາມໜ້າເຊື່ອຖືຂອງລາຍງານທາງການເງິນ

<u>ຫຼັກປະຕິບັດຂອງພະນັກງານ</u>

ພວກເຮົາຈະ:

- ບໍ່ໃຊ້ຊັບສິນຂອງນິຄອນເພື່ອປະໂຫຍດຂອງເຮົາ ຫຼື ຂອງຜູ້ອື່ນເປັນການສ່ວນຕົວ, ເຮົາຈະຄຳນຶງເຖິງຄວາມສຳຄັນຂອງຊັບສິນຂອງນິຄອນໃນການເຮັດວຽກປະຈຳວັນຢ່າງເຕັມທີ່ ແລະ ຈະຈັດການ ແລະ ໃຊ້ຢ່າງເໝາະສົມຕາມຫຼັກເກນຂອງບໍລິສັດເພື່ອປ້ອງກັນການສູນຫາຍ, ເສຍຫາຍ ຫຼື ການຖືກໂຈນລະກຳ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

### (11) ການປົກປ້ອງສິດທິແຫ່ງຊັບສິນທາງປັນຍາ

- ພວກເຮົາຄຳນຶງສະເໝີວ່າຊັບສິນທາງປັນຍາຂອງນິຄອນເຊັ່ນ: ສິດທິບັດ, ສິດທິບັດການອອກແບບ (1), ເຄື່ອງໝາຍການຄ້າ (2), ລິຂະສິດ ແລະ ຄວາມລັບທາງການຄ້າເປັນຊັບສິນອັນລ້ຳຄ່າຂອງນິຄອນທີ່ຕ້ອງໄດ້ຮັບການປົກປ້ອງໃນທຸກເວລາ ພວກເຮົາຈະຮ່ວມກັນສ້າງ, ປົກປ້ອງ ແລະ ນຳໃຊ້ຜົນປະໂຫຍດຈາກສິດທິແຫ່ງຊັບສິນທາງປັນຍາຂອງນິຄອນ, ພວກເຮົາບໍ່ອະນຸຍາດໃຫ້ບຸກຄົນທີສາມນຳໃຊ້ຊັບສິນທາງປັນຍາຂອງນິຄອນໂດຍປາສະຈາກຄຳຍິນຍອມ ແລະ ການອະນຸມັດຈາກນິຄອນ

- ພວກເຮົາເຄົາລົບໃນສິດທິແຫ່ງຊັບສິນທາງປັນຍາຂອງຜູ້ອື່ນ ແລະ ຈະບໍ່ລະເມີດ ຫຼື ໃຊ້ສິດທິດ້ານຊັບສິນທາງປັນຍາຂອງຜູ້ອື່ນຊັ່ນ: ສິດທິບັດ, ສິດທິບັດການອອກແບບ, ເຄື່ອງໝາຍການຄ້າ ແລະ ລິຂະສິດ ພວກເຮົາຈະປະຕິບັດຢ່າງເໝາະສົມ ແລະ ຖືກຕ້ອງຕາມກົດໝາຍຫາກຕ້ອງການນຳໃຊ້ຂໍ້ມູນຈາກຊັບສິນທາງປັນຍາຂອງຜູ້ອື່ນ

### ຫຼັກຄິດຂອງນິຄອນ

ຊັບສິນທາງປັນຍາຖືເປັນສິນຊັບທີ່ສຳຄັນໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນ ແລະ ຄວາມຮັ່ງມີໃຫ້ກັບທຸລະກິດຂອງນິຄອນ ນິຄອນຈະສ້າງ, ຮັກສາ ແລະ ໃຊ້ຊັບສິນທາງປັນຍາຢ່າງຖືກຕ້ອງຕາມກົດໝາຍ ແລະ ຢ່າງມີກົນລະຍຸດ ນິຄອນຈະຢືນຢັດຕໍ່ຕ້ານການກະທຳທີ່ລະເມີດສິດທິແຫ່ງຊັບສິນທາງປັນຍາຂອງເຮົາຕາມກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງ ນິຄອນຈະເຄົາລົບໃນສິດທິແຫ່ງຊັບສິນທາງປັນຍາຂອງຜູ້ອື່ນ ແລະ ລະມັດລະວັງບໍ່ລະເມີດສິດທິນັ້ນ

ຄຳອະທິບາຍສັບ

(1) "ສິດທິບັດການອອກແບບ" ໝາຍຄວາມລວມເຖິງການອອກແບບພາຍນອກຂອງຜະລິດຕະພັນເຊັ່ນ: ກ້ອງຖ່າຍຮູບ ແລະ ອາດໝາຍເຖິງການອອກແບບຊິ້ນສ່ວນຂອງຜະລິດຕະພັນເຊັ່ນ: ຊິ້ນສ່ວນສີແດງເທິງກຣິບຂອງກ້ອງ ຫຼື ລັກສະນະການປາກົດຂອງພາຍໃນຈໍ LCD ນອກຈາກນີ້ການອອກແບບບັນຈຸພັນອາດເຂົ້າຂ່າຍດ້ວຍເຊັ່ນກັນ

(2) "ເຄື່ອງໝາຍການຄ້າ" ໃຊ້ໄດ້ທັງສຳລັບສິນຄ້າ ແລະ ບໍລິການ ແລະ ບໍ່ໄດ້ໝາຍເຖິງພຽງແຕ່ຕົວອັກສອນ, ພາບປະກອບ ແລະ ສັນຍາລັກເທົ່ານັ້ນ ແຕ່ຍັງລວມເຖິງຮູບຊົງສາມມິຕິ ສີສັນ ແລະ ສຽງອີກດ້ວຍເຊັ່ນ: ການສິນຄ້າຂອງນິຄອນ ຊື່ຜະລິດຕະພັນ NIKKOR ແລະ ຊື່ບໍລິການຕ່າງໆເຊັ່ນ: Nikon School ເປັນຕົ້ນ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ດຳເນີນການຢ່າງຮອບຄອບທັງໃນດ້ານກົດໝາຍ ແລະ ກົນລະຍຸດໃນການເຮັດໃຫ້ໄດ້ມາຮັກສາໄວ້ ແລະ ໃຊ້ປະໂຫຍດຈາກຊັບສິນທາງປັນຍາ ແລະ ຈະດຳເນີນການທາງກົດໝາຍໃດໆທີ່ຈຳເປັນເພື່ອໃຫ້ບັນລຸເປົ້າໝາຍນີ້
- ບໍ່ລະເມີດສິດທິແຫ່ງຊັບສິນທາງປັນຍາຂອງຜູ້ອື່ນຫາກບໍ່ແນ່ໃຈໃນການຈັດການກັບຊັບສິນທາງປັນຍາ ພວກເຮົາຈະບໍ່ດຳເນີນການຢ່າງໜຶ່ງຢ່າງໃດກ່ອນທີ່ຈະປຶກສາກັບພະແນກທີ່ກ່ຽວຂ້ອງພາຍໃນກຸ່ມບໍລິສັດນິຄອນ

### ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍພື້ນຖານກ່ຽວກັບຊັບສິນທາງປັນຍາຂອງບໍລິສັດ
- ໃນເຄືອນິຄອນ (IP POLICY)

ຂໍ້ກຳນົດກ່ຽວກັບການຈັດການເຄື່ອງໝາຍທາງການຄ້າ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

(12) ການສື່ສານຢ່າງມີປະສິດທິພາບ ແລະ ຈິງໃຈ

- ພວກເຮົາຈະໃຫ້ຂໍ້ມູນທີ່ເປັນຄວາມຈິງ ແລະ ຖືກຕ້ອງໃນສິ່ງຕີພິມ, ການໂຄສະນາ, ການຕະຫຼາດ ແລະ ກິດຈະກຳສົ່ງເສີມການຂາຍຂອງພວກເຮົາ ພວກເຮົາຈະປະຕິບັດຕາມກົດໝາຍທີ່ບັງຄັບໃຊ້ຂອງແຕ່ລະປະເທດ ແລະ ຂົງເຂດ ມຸ່ງໝັ້ນທີ່ຈະເຮັດໂຄສະນາ, ຄັດລອກ ແລະ ຈັດສະແດງທີ່ຖືກຕ້ອງ, ເຂົ້າໃຈງ່າຍ ແລະ ບໍ່ກໍ່ໃຫ້ເກີດຄວາມເຂົ້າໃຈຜິດ ແລະ ບໍ່ດຳເນີນການໃດໆທີ່ອາດຫຼອກລວງລູກຄ້າຢ່າງບໍ່ຍຸດຕິທຳ ຫຼື ເຮັດໃຫ້ລູກຄ້າເຂົ້າໃຈຜິດ ເລືອກສິນຄ້າ ຫຼື ບໍລິການທີ່ບໍ່ຖືກຕ້ອງ ຫຼື ບໍ່ເໝາະສົມ

- ນິຄອນຈະບໍ່ເຜີຍແຜ່ຂໍ້ມູນໃດໆທີ່ລະເມີດສິດໃນຊັບສິນທາງປັນຍາຂອງຜູ້ອື່ນ

- ນິຄອນຈະຫຼີກລ້ຽງການໃຊ້ສື່ໂຄສະນາເຊິ່ງອາດມີເນື້ອຫາທີ່ເປັນການທຳລາຍຄວາມສະຫງົບຮຽບຮ້ອຍ ແລະ ສິລະທຳອັນດີຂອງສ່ວນລວມ ຫຼື ສິ່ງພິມກະທົບໃນທາງລົບຕໍ່ສັງຄົມ

### ຫຼັກຄິດຂອງນິຄອນ

ຊັບສິນທາງປັນຍາຖືເປັນສິນຊັບທີ່ສຳຄັນໃນການສ້າງຄວາມໄດ້ປຽບທາງການແຂ່ງຂັນ ແລະ ຄວາມຮັ່ງມີໃຫ້ກັບທຸລະກິດຂອງນິຄອນ ນິຄອນຈະສ້າງ, ຮັກສາ ແລະ ໃຊ້ຊັບສິນທາງປັນຍາຢ່າງຖືກຕ້ອງຕາມກົດໝາຍ ແລະ ຢ່າງມີກົນລະຍຸດ ນິຄອນຈະຢືນຢັດຕໍ່ຕ້ານການກະທຳທີ່ລະເມີດສິດທິແຫ່ງຊັບສິນທາງປັນຍາຂອງເຮົາຕາມກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງ ນິຄອນຈະເຄົາລົບໃນສິດທິແຫ່ງຊັບສິນທາງປັນຍາຂອງຜູ້ອື່ນ ແລະ ລະມັດລະວັງບໍ່ລະເມີດສິດທິນັ້ນ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບທີ່ໃຊ້ບັງຄັບໃນແຕ່ລະປະເທດ ແລະ ໃຫ້ຂໍ້ມູນທີ່ຖືກຕ້ອງຊື່ກົງ ໃຫ້ຂໍ້ມູນທີ່ບໍ່ເຮັດໃຫ້ເກີດຄວາມເຂົ້າໃຈຜິດ ຫຼື ເຮັດໃຫ້ຮູ້ສຶກທາງບວກຫຼາຍເກີນຄວາມຈິງໃນເລື່ອງຂອງການໃຊ້ງານ ແລະ ຄຸນລັກສະນະຂອງຜະລິດຕະພັນ ແລະ ບໍລິການ
- ພະຍາຍາມກວດສອບໃຫ້ແນ່ໃຈລ່ວງໜ້າວ່າສິດທິຂອງຜູ້ອື່ນລວມທັງສິດທິມະນຸດ, ລິຂະສິດ ແລະ ສິດທິການຖ່າຍພາບ (ບຸກຄົນ) ຈະບໍ່ຖືກລະເມີດ ຫຼື ຝ່າຝືນກ່ອນທີ່ຈະເຜີຍແຜ່ ຫຼື ມີສ່ວນຮ່ວມໃນກິດຈະກຳສົ່ງເສີມການຂາຍໃດໆ
- ຮັກສາຄວາມຮູ້ ແລະ ຮູ້ເທົ່າທັນຮູບແບບສື່ ແລະ ໃຫ້ແນ່ໃຈວ່າຈະບໍ່ໂຄສະນາດ້ວຍສື່ທີ່ກ່ຽວຂ້ອງກັບການປະຕິບັດທີ່ຜິດກົດໝາຍ ຫຼື ຜິດຈະລິຍະທຳ
- ພວກເຮົາຈະໃຫ້ຄວາມລະມັດລະວັງເປັນພິເສດໃນສ່ວນຂອງກິດຈະກຳປະຊາສຳພັນເພື່ອບໍ່ໃຫ້ເກີດຄວາມສຳພັນກັບສື່ຕ່າງໆທີ່ໜ້າສົງໃສວ່າຈະເຊື່ອມໂຍງກັບການກະທຳທີ່ຜິດກົດໝາຍ ຫຼື ຜິດຈະລິຍະທຳ ແລະ ພະຍາຍາມປະຕິເສດການສຳພາດຈາກສື່ດັ່ງກ່າວ

## 5. ດຳເນີນທຸລະກິດຢ່າງຖືກຕ້ອງເປັນທຳ

(13) ການຈັດການຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທີ່ເປັນຄວາມລັບ
ຢ່າງເໝາະສົມ

- ພວກເຮົາຈະດຳເນີນການດ້ານການຮັກສາຄວາມປອດໄພຂອງຂໍ້ມູນ ເພື່ອເກັບຮັກສາຂໍ້ມູນຂ່າວສານທີ່ເປັນຄວາມລັບ, ພາລະຜູກພັນໃນການຮັກສາຄວາມລັບນັ້ນຈະຄົງຢູ່ເຖິງແມ່ນວ່າຈະສິ້ນສຸດການເປັນບຸກຄະລາກອນຂອງນິຄອນໄປແລ້ວກໍ່ຕາມ, ພວກເຮົາຈະບໍ່ນຳຂໍ້ມູນຂ່າວສານທີ່ເປັນຄວາມລັບນັ້ນ ໄປນຳໃຊ້ເພື່ອຜົນປະໂຫຍດເພື່ອຈຸດປະສົງສ່ວນຕົວ

- ພວກເຮົາຈະປະມວນຜົນຂໍ້ມູນສ່ວນບຸກຄົນດ້ວຍຄວາມເປັນທຳ ແລະ ຖືກຕ້ອງຕາມວັດຖຸປະສົງທີ່ລະບຸໄວ້ ແລະ ຕາມກົດໝາຍທີ່ຍັງຄັບໃຊ້

- ພວກເຮົາຈະຈັດການຂໍ້ມູນຂ່າວສານທາງທຸລະກິດລວມເຖິງຂໍ້ມູນສ່ວນບຸກຄົນຢ່າງເໝາະສົມຕາມລະດັບຄວາມລັບຂອງຂໍ້ມູນເພື່ອຫຼີກລ້ຽງຄວາມເສຍຫາຍ ແລະ ການຮົ່ວໄຫຼຂອງຂໍ້ມູນ

<u>ຫຼັກຄິດຂອງນິຄອນ</u>

ໜຶ່ງໃນຄວາມຮັບຜິດຊອບທີ່ສຳຄັນທີ່ສຸດຂອງນິຄອນຕໍ່ສັງຄົມຄືການຈັດການຊັບສິນທີ່ເປັນສາລະສົນເທດຢ່າງເໝາະສົມ ເລື່ອງນີ້ຖືເປັນເລື່ອງສຳຄັນທີ່ຈະເຮັດໃຫ້ນິຄອນໄດ້ຮັບຄວາມໄວ້ວາງໃຈຈາກລູກຄ້າ ແລະ ເຕີບໃຫຍ່ໄປໄດ້ ໃນໄລຍະຫຼັງມານີ້ໂອກາດທີ່ນິຄອນສາມາດເຂົ້າເຖິງ ແລະ ໃຊ້ຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທີ່ເປັນຄວາມລັບຂອງລູກຄ້າມີຫຼາຍຂຶ້ນ ຂະບວນການລວມຂໍ້ມູນ ແລະ ການເພີ່ມຈຳນວນຂອງຜູ້ໄດ້ຮັບອະນຸຍາດໃຫ້ເຂົ້າເຖິງຂໍ້ມູນເຮັດໃຫ້ຄວາມສ່ຽງຂອງການຮົ່ວໄຫຼຂອງຂໍ້ມູນສູງຂຶ້ນ ນິຄອນຈະປະຕິບັດງານຢ່າງຈິງຈັງເພື່ອປ້ອງກັນການຮົ່ວໄຫຼຂອງຂໍ້ມູນດັ່ງກ່າວ ນິຄອນຈະປະຕິບັດຕາມກົດໝາຍ, ຂໍ້ບັງຄັບ ແລະ ກົດລະບຽບຂອງບໍລິສັດທີ່ກ່ຽວຂ້ອງກັບການຈັດການສາລະສົນເທດ ແລະ ຕອບສະໜອງໃນທັນທີຫາກເກີດກໍລະນີທີ່ມີການຮົ່ວໄຫຼຂອງຂໍ້ມູນລູກຄ້າ ຫຼື ຂໍ້ມູນທີ່ເປັນຄວາມລັບອື່ນ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ປະຕິບັດຕາມກົດລະບຽບຂອງບໍລິສັດຕະຫຼອດຈົນກົດໝາຍ ແລະ ລະບຽບຂໍ້ບັງຄັບທີ່ກ່ຽວກັບຄວາມໝັ້ນຄົງປອດໄພຂອງສາລະສົນເທດ
- ເຂົ້າຮ່ວມການຝຶກອົບຮົມກ່ຽວກັບຄວາມໝັ້ນຄົງປອດໄພຂອງສາລະສົນເທດ ແລະ ຝຶກຝົນທັກສະ ແລະ ຮຽນຮູ້ສິ່ງຈຳເປັນໃນການຈັດການສາລະສົນເທດຢ່າງເໝາະສົມ
- ບັງຄັບໃຊ້ມາດຕະຖານການຮັກສາຄວາມໝັ້ນຄົງປອດໄພຂອງສາລະສົນເທດຕາມຄຳແນະນຳຂອງນິຄອນ
- ຈັດການຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທີ່ມີລະດັບຊັ້ນຄວາມລັບຢ່າງເຂັ້ມງວດເພື່ອປ້ອງກັນການຮົ່ວໄຫຼ ຫຼື ການສູນເສຍຂອງຂໍ້ມູນ
- ລາຍງານຜູ້ບັງຄັບບັນຊາ ແລະ ພະແນກ Information Security ທັນທີຫາກເກີດເຫດການຄວາມໝັ້ນຄົງປອດໄພດ້ານສາລະສົນເທດ ແລະ ຫາມາດຕະການເພື່ອປ້ອງກັນບໍ່ໃຫ້ເກີດເຫດຊ້ຳ
- ກວດສອບໃຫ້ແນ່ໃຈອີກຄັ້ງວ່າໂພສຂອງເຮົາຈະບໍ່ສົ່ງຜົນໃຫ້ຂໍ້ມູນລັບຂອງບໍລິສັດຮົ່ວໄຫຼເມື່ອໃຊ້ໂຊຊ້ຽວມີເດຍຂອງບໍລິສັດ ຫຼື ໂຊຊ້ຽວມີເດຍສ່ວນບຸກຄົນ

### ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍດ້ານຄວາມໝັ້ນຄົງປອດໄພດ້ານສາລະສົນເທດຂອງບໍລິສັດໃນເຄືອນິຄອນ
ກົດການຈັດການຂໍ້ມູນຂອງບໍລິສັດໃນເຄືອນິຄອນ
ຄຳຖະແຫຼງການການຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງບໍລິສັດໃນເຄືອນິຄອນ
ຂໍ້ກຳນົດການປະມວນຜົນຂໍ້ມູນສ່ວນບຸກຄົນຂອງບໍລິສັດໃນເຄືອນິຄອນ
ນະໂຍບາຍການໃຊ້ໂຊຊ້ຽວມີເດຍຂອງກຸ່ມບໍລິສັດ

## 6. ການເປີດເຜີຍຂໍ້ມູນທີ່ຖືກຕ້ອງໂປ່ງໃສ

- ນິຄອນຈະຈັດເຮັດບັນຊີຕາມຂະບວນການທາງບັນຊີຢ່າງຖືກຕ້ອງຕາມຂໍ້ເທັດຈິງເພື່ອປະຕິບັດຕາມພາລະຜູກພັນທາງພາສີຂອງນິຄອນ ແລະ ພາລະຜູກພັນທາງກົດໝາຍອື່ນໆ
- ນິຄອນຈະຍຶດໝັ້ນໃນການລາຍງານຂໍ້ມູນທາງທຸລະກິດຢ່າງຖືກຕ້ອງ ພວກເຮົາຈະປະຕິບັດຕາມຫຼັກການບັນຊີທີ່ຮັບຮອງທົ່ວໄປ ບົນພື້ນຖານຂອງຂໍ້ເທັດຈິງເພື່ອເປີດເຜີຍຂໍ້ມູນທີ່ຖືກຕ້ອງທັນເວລາ ແລະ ເພື່ອໃຫ້ສອດຄ່ອງກັບໜ້າທີ່ຕາມກົດໝາຍເຊັ່ນ: ການຈ່າຍພາສີ ພວກເຮົາຈະບໍ່ປະຕິບັດການດ້ານບັນຊີທີ່ບໍ່ເໝາະສົມບໍ່ວ່າເພື່ອຜົນປະໂຫຍດໃນການສ້າງຜົນກຳໄລ, ສ້າງຍອດຂາຍໃຫ້ໄດ້ຕາມເປົ້າໝາຍ, ຫຼຸດລາຍຈ່າຍ ຫຼື ເຫດຜົນອື່ນໃດກໍ່ຕາມ
- ນິຄອນຈະເກັບບັນທຶກທາງບັນຊີຂອງທຸລະກຳທາງທຸລະກິດທັງໝົດຕາມມາດຕະຖານການບັນຊີທີ່ເໝາະສົມ ແລະ ຈະເປີດເຜີຍຂໍ້ມູນທີ່ຖືກຕ້ອງໃນເວລາທີ່ເໝາະສົມ
- ນິຄອນຈະຈັດການ ແລະ ເປີດເຜີຍຂໍ້ມູນທີ່ບໍ່ແມ່ນຂໍ້ມູນທາງການເງິນລວມເຖິງຂໍ້ມູນ ESG (Environment, Social, and Governance (ສິ່ງແວດລ້ອມ, ສັງຄົມ ແລະ ທຳມາພິບານ)) ຢ່າງເໝາະສົມ
- ພວກເຮົາຈະຈັດກຽມ ແລະ ຈັດເກັບເອກະສານ ແລະ ຂໍ້ມູນຢ່າງຖືກຕ້ອງ ແລະ ຈະບໍ່ມີສ່ວນຮ່ວມໃນການປອມແປງການສ້າງຂໍ້ມູນເທັດ ຫຼື ການນຳໄປໃຊ້ໃນທາງທີ່ຜິດ

<u>ຫຼັກຄິດຂອງນິຄອນ</u>

- ການສື່ສານໃຫ້ທຸກຄົນເຂົ້າໃຈຈຸດຢືນຂອງບໍລິສັດຢ່າງຖືກຕ້ອງເປັນສິ່ງຈຳເປັນຂັ້ນພື້ນຖານໃນການບໍລິຫານຈັດການອົງກອນຢ່າງໂປ່ງໃສ
- ໃນການເປີດເຜີຍຂໍ້ມູນທາງການຢ່າງຖືກຕ້ອງ ນິຄອນມີໜ້າທີ່ໃນການຈັດເຮັດງົບການເງິນໂດຍບໍ່ບິດບຽນຂໍ້ເທັດຈິງອັນເກີດຈາກຄວາມບົກພ່ອງທີ່ເປັນຜົນມາຈາກການທຸຈະລິດ ຫຼື ຂໍ້ຜິດພາດເພື່ອໃຫ້ບັນລຸເຖິງໜ້າທີ່ນີ້
- ນິຄອນຈະຈັດການ ແລະ ເປີດເຜີຍຂໍ້ມູນທີ່ບໍ່ແມ່ນຂໍ້ມູນທາງການເງິນຢ່າງເໝາະສົມເຊັ່ນ: ຂໍ້ມູນທີ່ກ່ຽວຂ້ອງກັບສິ່ງແວດລ້ອມ, ສິດທິມະນຸດ ແລະ ຄວາມສຳພັນດ້ານແຮງງານ ເພື່ອໃຫ້ເປັນໄປຕາມຂໍ້ກຳນົດການເປີດເຜີຍຂໍ້ມູນທີ່ບໍ່ແມ່ນຂໍ້ມູນທາງການເງິນລະຫວ່າງປະເທດ ແລະ ເພື່ອໃຫ້ເປັນໄປຕາມຄວາມຄາດຫວັງຂອງຜູ້ທີ່ມີສ່ວນໄດ້ສ່ວນເສຍຂອງພວກເຮົາ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ບໍ່ເລື່ອນການບັນທຶກລາຍການຮັບ-ຈ່າຍ ຕັດອອກ ຄ່າເສື່ອມລາຄາຂອງສິນຊັບໃຫ້ໄວຂຶ້ນ ຫຼື ຊ້າລົງເພື່ອໃຫ້ເປັນໄປຕາມງົບປະມານທີ່ກຳນົດໄວ້ແລ້ວ
- ບໍ່ກະທຳການທີ່ນຳໄປສູ່ການເຮັດບັນຊີທີ່ບໍ່ເໝາະສົມເຊັ່ນ: ເລື່ອນເວລາໃນຂັ້ນຕອນຂອງການບໍລິຫານໃຫ້ລ່າຊ້າອອກໄປເຮັດໃຫ້ເກີດຂໍ້ຜິດພາດໃນການຄຳນວນ
- ບັນທຶກທຸລະກຳທີ່ກ່ຽວຂ້ອງກັບລາຍໄດ້, ລາຍຈ່າຍ, ການຊື້ສິນຊັບເພື່ອປະໂຫຍດທາງທຸລະກິດ, ການບັນຊີກ່ຽວກັບສິນຊັບໜີ້ສິນ ແລະ ພາລະຜູກພັນຢ່າງຖືກຕ້ອງຕາມມາດຕະຖານການບັນຊີເພື່ອໃຫ້ການເປີດເຜີຍຂໍ້ມູນເປັນໄປຢ່າງຖືກຕ້ອງຕາມຄວາມເປັນຈິງ

### ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍການບັນຊີ ແລະ ການເງິນຂອງບໍລິສັດໃນເຄືອ

ນະໂຍບາຍພາສີລະຫວ່າງປະເທດ

## 7. ການສ້າງສາຜະລິດຕະພັນ ແລະ ບໍລິການທີ່ມີຄຸນຄ່າ

- ນິຄອນມຸ່ງຫວັງທີ່ຈະມີສ່ວນຮ່ວມໃນການແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມດ້ວຍການສະໜອງຜະລິດຕະພັນ ບໍລິການ ແລະ ໂຊລູຊັນທີ່ເປັນເອກະລັກສະເພາະຂອງນິຄອນ ພວກເຮົາຈະເອົາໃຈໃສ່ ແລະ ຄຳນຶງເຖິງຄວາມຄາດຫວັງ ແລະ ຄວາມຕ້ອງການຂອງສັງຄົມ ແລະ ລູກຄ້າຢ່າງຕໍ່ເນື່ອງ ແລະ ຈະມຸ່ງໝັ້ນສ້າງຜະລິດຕະພັນ, ບໍລິການ ແລະ ໂຊລູຊັນທີ່ເປັນປະໂຫຍດສູ່ສັງຄົມ

- ພວກເຮົາຈະປະຕິບັດຕາມກົດໝາຍ, ຂໍ້ບັງຄັບ, ມາດຕະຖານ ແລະ ກົດເກນດ້ານຄຸນນະພາບທີ່ກ່ຽວຂ້ອງໃນດ້ານຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ, ບໍລິການ ແລະ ໂຊລູຊັນຂອງນິຄອນ

- ພວກເຮົາຈະນຳສະເໜີຄູ່ມືການໃຊ້ງານ ແລະ ຂໍ້ມູນທີ່ກ່ຽວຂ້ອງອື່ນໆໃນຮູບແບບທີ່ສາມາດເຂົ້າໃຈໄດ້ໂດຍງ່າຍເພື່ອໃຫ້ຜະລິດຕະພັນ, ບໍລິການ ແລະ ໂຊລູຊັນຂອງພວກເຮົາສາມາດຖືກນຳໄປໃຊ້ງານໄດ້ຢ່າງເໝາະສົມ ແລະ ປອດໄພ

- ພວກເຮົາຈະພະຍາຍາມໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ເປັນປະໂຫຍດດ້ວຍວິທີທີ່ສາມາດເຂົ້າໃຈໄດ້ໂດຍງ່າຍຕໍ່ລູກຄ້າເພື່ອໃຫ້ລູກຄ້າໃຊ້ໃນການຕັດສິນໃຈຢ່າງເໝາະສົມ ພ້ອມກັນນັ້ນພວກເຮົາຈະຕອບສະໜອງຕໍ່ຄຳຖາມ ຫຼື ຮຽກຮ້ອງຂອງລູກຄ້າຢ່າງວ່ອງໄວ ແລະ ຊື່ກົງ

- ໃນກໍລະນີທີ່ເກີດບັນຫາດ້ານຄຸນນະພາບ ແລະ ຄວາມປອດໄພ ນິຄອນຈະໃຊ້ມາດຕະການທີ່ເໝາະສົມເຊັ່ນ: ການຮຽກຄືນຜະລິດຕະພັນ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງ ແລະ ຈະພະຍາຍາມປ້ອງກັນບໍ່ໃຫ້ເກີດເຫດຊ້ຳ

## ຫຼັກຄິດຂອງນິຄອນ

ດ້ານປະຫວັດສາດທີ່ຍາວນານກວ່າ 100 ປີ ເຮົາຍັງຄົງສ້າງຄຸນຄ່າໃໝ່ໆທີ່ມີສ່ວນຊ່ວຍໃນການພັດທະນາສັງຄົມທີ່ຍືນຍົງຢ່າງຕໍ່ເນື່ອງດ້ວຍຄວາມຄິດສ້າງສັນ ແລະ ສີມືໃນການຜະລິດ (Monozukuri) ທີ່ມີປະສິດທິພາບ ນິຄອນມຸ່ງໝັ້ນທີ່ຈະຕອບສະໜອງຄວາມຄາດຫວັງຂອງລູກຄ້າ ແລະ ສັງຄົມດ້ວຍການສ້າງຜະລິດຕະພັນຄຸນນະພາບສູງທີ່ມີເອກະລັກສະເພາະອອກສູ່ຕະຫຼາດໃນເວລາທີ່ເໝາະສົມໄປພ້ອມກັນກັບການຍົກລະດັບມູນຄ່າແບຣນຢູ່ສະເໝີ ນອກຈາກນີ້ຄວາມປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມຂອງຜະລິດຕະພັນ, ບໍລິການ ແລະ ໂຊລູຊັນຂອງພວກເຮົາຖືເປັນສ່ວນສຳຄັນຂອງຄຸນນະພາບ ພວກເຮົາຈະປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງເພື່ອຮັບຮອງຄຸນນະພາບນັ້ນ ແລະ ຈະສົ່ງເສີມມາດຕະຖານຂອງການດຳເນີນກິດຈະກຳທາງທຸລະກິດທີ່ກ່ຽວຂ້ອງ ແລະ ຈັດການຮຽນຮູ້ລວມເຖິງການຝຶກອົບຮົມໃຫ້ພະນັກງານມີຄວາມຮູ້ ແລະ ທັກສະທີ່ຈຳເປັນເພື່ອຮັກສາຄຸນນະພາບໄວ້ດ້ວຍຄວາມຈິງໃຈ ນອກຈາກນີ້ພວກເຮົາຈະຄົ້ນຫາຕົ້ນເຫດຂອງບັນຫາດ້ານຄຸນນະພາບ ແລະ ໃຊ້ມາດຕະການເພື່ອແກ້ໄຂບັນຫານັ້ນ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ມຸ່ງໝັ້ນທີ່ຈະສ້າງເທັກໂນໂລຢີ, ຜະລິດຕະພັນ, ບໍລິການ ແລະ ໂຊລູຊັນໃໝ່ໆ ດ້ວຍເປົ້າໝາຍລະດັບໂລກທີ່ຈະຊ່ວຍໃນການແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມ
- ມຸ່ງໝັ້ນຮັກສາ ແລະ ພັດທະນາຄຸນນະພາບຂອງຜະລິດຕະພັນ ບໍລິການ ແລະ ໂຊລູຊັນ ປະຕິບັດຕາມກົດທີ່ກຳນົດຂຶ້ນເພື່ອໃຫ້ໝັ້ນໃຈວ່າງານໃນແຕ່ຂະບວນການຕັ້ງແຕ່ການວາງແຜນຜະລິດຕະພັນຈົນເຖິງຕະຫຼາດການບໍລິການຫຼັງການຂາຍໄດ້ເຮັດໃຫ້ສຳເລັດລົງຢ່າງຖືກຕ້ອງສົມບູນ
- ຈັດເຮັດລາຍງານທັນທີ ແລະ ດຳເນີນມາດຕະການຫາກພວກເຮົາສັງເກດເຫັນອຸປະຕິເຫດ, ບັນຫາດ້ານຄຸນນະພາບ ຫຼື ຄວາມປອດໄພ ຫຼື ຄວາມຜິດປົກກະຕິກ່ຽວກັບຜະລິດຕະພັນ ບໍລິການ ແລະ ໂຊລູຊັນຂອງພວກເຮົາ ນອກຈາກນີ້ພວກເຮົາຈະໃຊ້ມາດຕະການປ້ອງກັນບໍ່ໃຫ້ເກີດເຫດການທີ່ຄ້າຍກັນຂຶ້ນອີກໃນອະນາຄົດ

### ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍຄຸນນະພາບຂັ້ນພື້ນຖານຂອງນິຄອນ
ແນວທາງວ່າດ້ວຍການບໍລິຫານຈັດການຄຸນນະພາບ (QMD)
ນະໂຍບາຍພື້ນຖານຂອງການຈັດຊື້ທີ່ເປັນມິດຕໍ່ສິ່ງແວດລ້ອມຂອງນິຄອນ

## 8. ສ້າງສຳພັນທີ່ດີກັບຊຸມຊົນ

- ພວກເຮົາໃຫ້ຄວາມສຳຄັນກັບຄວາມຫຼາກຫຼາຍຂອງບຸກຄົນ ແລະ ຂອງກຸ່ມ ຈະເຄົາລົບ ແລະ ເຂົ້າໃຈວັດທະນະທຳ, ຄ່ານິຍົມທຳນຽມປະເພນີຂອງຊຸມຊົນໃນແຕ່ລະພື້ນທີ່ທີ່ນິຄອນເຂົ້າໄປປະກອບທຸລະກິດ

- ນິຄອນພ້ອມສະເໜີທີ່ຈະມີສ່ວນຮ່ວມກັບກິດຈະກຳເພື່ອສັງຄົມ ແລະ ຊຸມຊົນ ແລະ ກິດຈະກຳຕ່າງໆເພື່ອປະໂຫຍດສາທາລະນະ ນິຄອນຈະປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງໃນແຕ່ລະປະເທດ ແລະ ແຕ່ລະຂົງເຂດທີ່ພວກເຮົາເຂົ້າໄປປະກອບທຸລະກິດອັນກ່ຽວເນື່ອງກັບການບໍລິຈາກ ແລະ ການກຸສົນ

- ນິຄອນຈະໃຫ້ຄວາມຮ່ວມມືເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຈະບໍ່ເຂົ້າໄປກ່ຽວຂ້ອງກັບການກະທຳທີ່ຜິດກົດໝາຍ ຫຼື ຜິດຈະລິຍະທຳ

<u>ຫຼັກຄິດຂອງນິຄອນ</u>

ເພື່ອໃຫ້ທຸລະກິດດຳເນີນຕໍ່ໄປໄດ້ຢ່າງລາບລື່ນ ນິຄອນຕ້ອງເຄົາລົບຄວາມຫຼາກຫຼາຍຂອງບຸກຄົນ ແລະ ຂອງກຸ່ມ ແລະ ຈຳເປັນຕ້ອງໄດ້ຮັບຄວາມໄວ້ວາງໃຈຈາກຊຸມຊົນທ້ອງຖິ່ນດ້ວຍການທຳຄວາມເຂົ້າໃຈ ແລະ ເຄົາລົບວັດທະນະທຳ, ຄ່ານິຍົມ, ທຳນຽມປະເພນີຂອງຊຸມຊົນ ພວກເຮົາມີຈຸດຢືນທີ່ຈະດຳເນີນກິດຈະກຳທາງທຸລະກິດໃຫ້ຈະເລີນເຕີບໃຫຍ່ກ້າວໜ້າໄປພ້ອມກັບຊຸມຊົນ (ກິດຈະກຳການເປັນພົນລະເມືອງທີ່ດີຂອງສັງຄົມ) ນິຄອນມຸ່ງໝາຍທີ່ຈະເຂົ້າໃຈປະເດັນທາງສັງຄົມ ແລະ ສ້າງຮາກຖານຂອງການເຕີບໃຫຍ່ຮ່ວມກັບຊຸມຊົນທ້ອງຖິ່ນດ້ວຍການສົ່ງເສີມກິດຈະກຳເພື່ອສັງຄົມໂດຍການມີສ່ວນຮ່ວມກັບຊຸມຊົນຢ່າງແຂ່ງຂັນ ແລະ ເຂົ້າໃຈຢ່າງເລິກເຊິ່ງໃນທຳນຽມປະເພນີທ້ອງຖິ່ນນັ້ນໆ ນິຄອນມຸ່ງໝັ້ນທີ່ຈະຮັກສາຄວາມສະຫງົບຮຽບຮ້ອຍຂອງສັງຄົມ ແລະ ຈະດຳເນີນກິດຈະກຳການບໍລິຈາກເພື່ອການກຸສົນໂດຍປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ນິຄອນຈະບໍ່ເຂົ້າໄປມີສ່ວນຮ່ວມໃນກິດຈະກຳຕໍ່ຕ້ານສັງຄົມເຊັ່ນ: ການໃຫ້ ແລະ ຮັບສິນບົນ, ການຂົ່ມຂູ່ຂົ່ມເຫັງ, ຄວາມຮຸນແຮງ ຫຼື ການເລືອກປະຕິບັດຕະຫຼອດຈົນດ້ານອື່ນໆທີ່ກ່ຽວຂ້ອງກັບຊຸມຊົນທ້ອງຖິ່ນ ນອກຈາກນີ້ນິຄອນຍັງເບິ່ງວ່າຄວາມພະຍາຍາມໃນການມີສ່ວນຮ່ວມ ແລະ ສ້າງຜົນກະທົບທາງບວກຕໍ່ສັງຄົມເປັນຮາກຖານໃນການດຳເນີນທຸລະກິດ ແລະ ເຮົາຈະບໍ່ອົດທົນຕໍ່ການກະທຳທີ່ຜິດກົດໝາຍ ຫຼື ຜິດຈະລິຍະທຳໃດໆ

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ມີສ່ວນຮ່ວມໃນກິດຈະກຳເພື່ອສັງຄົມ ແລະ ຊຸມຊົນເພື່ອພັດທະນາຊຸມຊົນທີ່ຍືນຍົງ (ກິດຈະກຳການເປັນພົນລະເມືອງທີ່ດີຂອງສັງຄົມ) ແລະ ເຮັດໃຫ້ພວກເຮົາສາມາດເຕີບໃຫຍ່ໄປພ້ອມກັບຊຸມຊົນເຫຼົ່ານີ້ໄດ້
- ປະຕິບັດຕາມກົດໝາຍ ແລະ ຂໍ້ບັງຄັບທີ່ກ່ຽວຂ້ອງໃນແຕ່ລະປະເທດ ແລະ ແຕ່ລະຂົງເຂດອັນກ່ຽວເນື່ອງກັບການບໍລິຈາກ ແລະ ການກຸສົນ ສະແດງຄວາມຮັບຜິດຊອບຂອງພວກເຮົາຕໍ່ຜູ້ມີສ່ວນໄດ້ສ່ວນເສຍດ້ວຍຄວາມໂປ່ງໃສ ແລະ ເປັນທຳ
- ບໍ່ເຂົ້າໄປກ່ຽວຂ້ອງກັບບຸກຄົນ ຫຼື ອົງກອນທີ່ມີສ່ວນຮ່ວມໃນພຶດຕິກຳທີ່ຜິດກົດໝາຍ ຫຼື ຜິດຈະລິຍະທຳເຊັ່ນ: ການໃຫ້ ແລະ ຮັບສິນບົນ, ການຂົ່ມຂູ່ຂົ່ມເຫັງ, ຄວາມໃຊ້ຮຸນແຮງ ຫຼື ການເລືອກປະຕິບັດ ແລະ ຈະໃຫ້ຄວາມຮ່ວມມືໃນການຮັກສາຄວາມສະຫງົບຮຽບຮ້ອຍຂອງສັງຄົມ

ນະໂຍບາຍຂອງກຸ່ມບໍລິສັດທີ່ກ່ຽວຂ້ອງກັບບົດນີ້:

ນະໂຍບາຍຄວາມເປັນພົນລະເມືອງທີ່ດີຂອງສັງຄົມ

ມາດຕະຖານການບໍລິຈາກເພື່ອການກຸສົນສາທາລະນະ

## 9. ຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ

- ພວກເຮົາຈະຫຼີກລ້ຽງການປະຕິບັດໃດໆທີ່ອາດກໍ່ໃຫ້ເກີດຂໍ້ຂັດແຍ່ງທາງຜົນປະໂຫຍດ

- ພວກເຮົາຈະບໍ່ເຂົ້າຮ່ວມໃນກິດຈະກຳໃດໆທີ່ສ້າງຄວາມເສຍຫາຍຕໍ່ຜົນປະໂຫຍດຂອງນິຄອນເພື່ອສ້າງປະໂຫຍດສ່ວນຕົວ ຫຼື ບຸກຄົນທີສາມ

### ຫຼັກຄິດຂອງນິຄອນ

ການຂັດແຍ່ງທາງຜົນປະໂຫຍດຈະເກີດຂຶ້ນເມື່ອຜົນປະໂຫຍດສ່ວນບຸກຄົນຂອງສະມາຊິກຂັດ ຫຼື ອາດຈະຂັດຕໍ່ຜົນປະໂຫຍດຂອງບໍລິສັດ ໃນກໍລະນີທີ່ເກີດຄວາມຂັດແຍ່ງທາງຜົນປະໂຫຍດຂຶ້ນ ຜົນປະໂຫຍດຂອງບໍລິສັດຕ້ອງໄດ້ຮັບການພິຈາລະນາກ່ອນ ບຸກຄົນ ແລະ ບຸກຄົນທີສາມຈະຕ້ອງບໍ່ໃຊ້ປະໂຫຍດຈາກຕຳແໜ່ງໜ້າທີ່ໃນບໍລິສັດເພື່ອສະແຫວງຫາຜົນປະໂຫຍດໃຫ້ຕົນເອງ

### ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ບໍ່ກະທຳການໃດໆທີ່ເປັນການທຳລາຍຜົນປະໂຫຍດຂອງບໍລິສັດ ແລະ ຈະກວດສອບໃຫ້ແນ່ໃຈວ່າຜົນປະໂຫຍດສ່ວນຕົວຂອງຕົນເອງ, ຄອບຄົວ, ເພື່ອນ ແລະ ຄົນຮູ້ຈັກຈະບໍ່ສົ່ງຜົນກະທົບຕໍ່ການຕັດສິນໃຈທາງທຸລະກິດຂອງຕົນ
- ລາຍງານເລື່ອງຕ່າງໆຕໍ່ຫົວໜ້າງານໂດຍທັນທີ ແລະ ຫຼັງຈາກນັ້ນໃຫ້ຍົກເວັ້ນການຕັດສິນໃຈໃນກໍລະນີທີ່ເກີດ ຫຼື ອາດຈະເກີດສະຖານະການທີ່ກ່ຽວຂ້ອງກັບຄວາມຂັດແຍ່ງທາງຜົນປະໂຫຍດຂຶ້ນ
- ບໍ່ກະທຳການໃດໆທີ່ຂັດແຍ່ງກັບຜົນປະໂຫຍດຂອງບໍລິສັດໂດຍບໍ່ໄດ້ຮັບອະນຸຍາດລ່ວງໜ້າ ເຊິ່ງລວມເຖິງການດຳລົງຕຳແໜ່ງເປັນພະນັກງານ ຫຼື ລູກຈ້າງໃນບໍລິສັດຄູ່ແຂ່ງ ຫຼື ຫຸ້ນສ່ວນທາງທຸລະກິດດ້ວຍ

## ລະບົບການລາຍງານ ແລະ ການປຶກສາຫາລື ແລະ<br>ຜົນຂອງການຝ່າຝືນ

ພວກເຮົາມີໜ້າທີ່ທີ່ຈະຕ້ອງລາຍງານການຝ່າຝືນຫຼັກຈັນຍາບັນ ຫຼື ແນວໂນ້ມທີ່ອາດຈະເກີດມີການຝ່າຝືນຫຼັກຈັນຍາບັນ

- ລະບົບການລາຍງານ ແລະ ການປຶກສາຫາລື
  ຫາກພົບວ່າມີການຝ່າຝືນຕໍ່ຫຼັກຈັນຍາບັນ ຫຼື ມີແນວໂນ້ມທີ່ຈະເກີດມີການຝ່າຝືນຫຼັກຈັນຍາບັນບຸກຄະລາກອນຈະຕ້ອງລາຍງານ ຫຼື ປຶກສາຫາລືກັບຫົວໜ້າຄຸມງານ ແລະ/ຫຼື ລາຍງານຜ່ານໜ່ວຍງານທີ່ຮັບລາຍງານ ແລະ ການປຶກສາຫາລື (ຫຼື ລາຍງານຜ່ານລະບົບການຮັບລາຍງານ ແລະ ການປຶກສາຫາລືທີ່ໃຊ້ຢູ່ໃນແຕ່ລະບໍລິສັດ) ຫຼື ລາຍງານໄປຍັງບຸກຄົນ ຫຼື ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບໃນເລື່ອງນີ້ ຫາກມີຂໍ້ສົງໄສ ຫຼື ຄຳຖາມ, ບຸກຄະລາກອນຕ້ອງປຶກສາຫາລືກັບຫົວໜ້າຄຸມງານ ຫຼື ຜູ້ຮັບຜິດຊອບດ້ານການຮັກສາຫຼັກການຄຸ້ມຄອງບໍລິຫານຂອງບໍລິສັດທີ່ຕົນສັງກັດຢູ່

- ການບໍ່ດຳເນີນການຕອບໂຕ້
  ບຸກຄະລາກອນທີ່ເປັນຜູ້ລາຍງານການຝ່າຝືນຫຼັກຈັນຍາບັນ ຫຼື ການມີແນວໂນ້ມວ່າອາດຈະເກີດມີການຝ່າຝືນຫຼັກຈັນຍາບັນຈະບໍ່ໄດ້ຮັບການຕອບໂຕ້ ຫຼື ມີຜົນກະທົບໃດໜຶ່ງຈາກການລາຍງານເລື່ອງດັ່ງກ່າວ

- ກໍລະນີທີ່ນິຄອນໄດ້ຮັບການແຈ້ງເບາະແສການຝ່າຝືນຫຼັກຈັນຍາບັນ ຫຼື ການມີແນວໂນ້ມວ່າອາດຈະເກີດມີການຝ່າຝືນຫຼັກຈັນຍາບັນ, ນິຄອນຈະຮີບດຳເນີນການກວດສອບຂໍ້ເທັດຈິງ, ຫາວິທີການແກ້ໄຂ ແລະ ຫາມາດຕະການປ້ອງກັນການເກີດເຫດການຊ້ຳຢ່າງຮີບດ່ວນ

- ຜົນຂອງການຝ່າຝືນ
  ການຝ່າຝືນຫຼັກຈັນຍາບັນຈະໄດ້ຮັບການລົງໂທດທາງວິໄນຈາກນິຄອນເຊິ່ງອາດເຖິງຂັ້ນການຍົກເລີກການຈ້າງແຮງງານ ແລະ ຫາກເປັນກໍລະນີທີ່ຜິດກົດໝາຍ, ນິຄອນອາດດຳເນີນການເພື່ອໃຫ້ເກີດຄວາມຮັບຜິດທາງແພ່ງ ຫຼື ທາງອາຍາອີກດ້ວຍ

## ຫຼັກຄິດຂອງນິຄອນ

ລະບົບການລາຍງານ ແລະ ການປຶກສາຫາລືຖືເປັນກົນໄກສຳຄັນສຳລັບນິຄອນໃນການແກ້ໄຂບັນຫາດ້ວຍວິທີການປະຕິບັດທີ່ຖືກຕ້ອງ ແລະ ຊ່ວຍຫຼຸດຜົນກະທົບອັນອາດເກີດຈາກບັນຫາເຫຼົ່ານັ້ນໄດ້ ນອກຈາກນີ້ຍັງເປັນກົນໄກສຳຄັນໃນການຮັກສາສະພາບແວດລ້ອມໃນການທຳງານທີ່ດີເອື້ອອຳນວຍໃຫ້ພະນັກງານປະຕິບັດໜ້າທີ່ໄດ້ໂດຍບໍ່ຕ້ອງກັງວົນໃຈ, ການລະເລີຍບັນຫາ ແລະ ປ່ອຍຖິ້ມໄວ້ໂດຍບໍ່ຈັດການຢ່າງເໝາະສົມອາດນຳໄປສູ່ຜົນຮັບທີ່ຮ້າຍແຮງເຊິ່ງກໍ່ໃຫ້ເກີດຄວາມເສຍຫາຍການຖືກປັບ, ຖືກລົງໂທດ, ການຝ່າຝືນກົດໝາຍ ຫຼື ການສູນເສຍຄວາມໄວ້ວາງໃຈໄດ້

## ຫຼັກປະຕິບັດຂອງພະນັກງານ

ພວກເຮົາຈະ:

- ລາຍງານຕໍ່ ຫຼື ຂໍຄຳປຶກສາຈາກຜູ້ບັງຄັບບັນຊາ ເມື່ອມີບັນຫາເກີດຂຶ້ນໃນສະຖານທີ່ເຮັດວຽກ
- ໃນກໍລະນີການປຶກສາຜູ້ບັງຄັບບັນຊາເປັນໄປໄດ້ຍາກເນື່ອງຈາກສະຖານະການທີ່ບໍ່ເອື້ອອຳນວຍ, ເຮົາຈະບໍ່ເກັບເລື່ອງໄວ້ກັບຕົວເອງແຕ່ຈະໃຊ້ລະບົບການລາຍງານ ແລະ ການປຶກສາຫາລືຂອງບໍລິສັດໃນການລາຍງານສະຖານະການດັ່ງກ່າວ
- ບໍ່ໃຊ້ລະບົບການລາຍງານ ແລະ ການປຶກສາຫາລືໂດຍມີວັດຖຸປະສົງທີ່ບໍ່ເໝາະສົມເຊັ່ນ: ການກະທຳເພື່ອຫວັງຜົນປະໂຫຍດສ່ວນຕົວ, ໝິ່ນປະໝາດ ຫຼື ໃສ່ຮ້າຍ

## ການບໍລິຫານຈັດການຫຼັກຈັນຍາບັນ / (ອ້າງອີງ) / ຂໍສະຫງວນສິດທິ

- ການຈັດຕັ້ງ, ການແກ້ໄຂ ແລະ ຍົກເລີກ
  ການຈັດຕັ້ງແກ້ໄຂ ແລະ ການຍົກເລີກຈັນຍາບັນສາມາດເກີດຂຶ້ນໄດ້ຕະຫຼອດເວລາໂດຍນິຄອນຄຣໍປໍເຣຊັນ ແລະ ເກີດຂຶ້ນດ້ວຍຂໍ້ສະເໜີຈາກປະທານຄະນະກໍາມະການຈະລິຍະທໍາອົງກອນຂອງນິຄອນຄຣໍປໍເຣຊັນ ແລ້ວຈຶ່ງປັ້ນຄໍາຮ້ອງຕໍ່ຄະນະກໍາມະການບໍລິຫານຂອງນິຄອນຄຣໍປໍເຣຊັນເຊິ່ງຈະເຮັດການຕັດສິນໃຈຂັ້ນສຸດທ້າຍ
  ການປ່ຽນແປງເລັກໜ້ອຍຈະຕັດສິນໃຈໂດຍປະທານຄະນະກໍາມະການຈະລິຍະທໍາອົງກອນຂອງນິຄອນຄຣໍປໍເຣຊັນ

- ຫາກພົບວ່າບໍລິບົດໃນຫຼັກຈັນຍາບັນຂັດຕໍ່ຫຼັກກົດໝາຍທ້ອງຖິ່ນນິຄອນຈະຍຶດຖືມາດຕະຖານທີ່ສູງກວ່າເປັນຫຼັກສະເໝີ, ຫາກມີຂໍ້ສົງໄສປະການໃດ, ຂໍໃຫ້ບຸກຄະລາກອນປຶກສາຫາລືຮ່ວມກັບຫົວໜ້າຄຸມງານ ຫຼື ຜູ້ຮັບຜິດຊອບດ້ານການເບິ່ງແຍງດູແລຂອງອົງກອນນັ້ນໆ ເພື່ອຊອກຫາແນວທາງແກ້ໄຂທີ່ເໝາະສົມ